ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*************************

# ບົດລາຍງານສະຫລຸບປິດໂຄງການຍ່ອຍ



ກະກຽມໂດຍໂຄງການຍ່ອຍ:

ໂຄງການສ້າງຄວາມເຂັ້ມແຂງດ້ານການວາງແຜນ, ປະສານງານ, ຕິດຕາມ ແລະ ປະເມີນຜົນຂອງ ໂຄງການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ ໂດຍສຸມໃສ່ໂຄງການທີ່ນອນໃນ (LENS2) (PICE-LENS2-027)

ທົບທວນ-ກວດກາໂດຍ ວິຊາການຕິດຕາມ ແລະ ປະເມີນຜົນ:.............................................

ວັນທີສົ່ງ:..................................................... 25 JAN 2022

ວັນທີທົບທວນ:.........................................

ວັນທີສົ່ງບົດລາຍງານສຸດທ້າຍ ສະບັບເຊັນ:.......................................................

## I. ຂໍ້ມູນທົ່ວໄປກ່ຽວກັບໂຄງການຍ່ອຍ

ເລກທີໂຄງການ : PICE-LENS2-027

**ຊື່ໂຄງການ:** ໂຄງການສ້າງຄວາມເຂັ້ມແຂງດ້ານການວາງແຜນ, ປະສານງານ, ຕິດຕາມ ແລະ ປະເມີນຜົນຂອງ ໂຄງການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ ໂດຍສຸມໃສ່ໂຄງການທີ່ນອນໃນ (LENS2)

**ທີ່ຕັ້ງໂຄງການ:** ຖະໜົນ: ລ້ານຊ້າງ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ.

**ອົງການຈັດຕັ້ງປະຕິບັດ:** ກົມແຜນການ ແລະ ການເງິນ, ກະຊວງກະສິກຳ ແລະ ປ່າໄມ້

ຊື່ຫົວໜ້າໂຄງການ ແລະ ຂໍ້ມູນຕິດຕໍ່ ເບີໂທ ແລະ ອີເມວ: ທ່ານ ສົມພະໄທ ລຽງສອນ 020 5987 8265

ວັນທີເຊັນສັນຍາ:

| | | |
|---|---|---|
| ໄລຍະເວລາໂຄງການຕາມແຜນ: | ແຕ່ 11/2018 | ຮອດ31/12/2020 |
| ໄລຍະເວລາຈັດຕັ້ງປະຕິບັດຕົວຈິງ: | ແຕ່10/2019 | ຮອດ 30/12/2021 |
| ການຕໍ່ສັນຍາໂຄງການຄັ້ງຫລັງສຸດ: | ແຕ່ 29/09/2021 | ຮອດ 31/12/2021 |

ຈຳນວນຄັ້ງທີ່ຂໍຕໍ່ອາຍຸໂຄງການຍ່ອຍ: 04 ຄັ້ງ (ວັນທີ 17 ທັນວາ 2020; ວັນທີ 30 ມີນາ 2021, 30 ມິຖຸນາ 2021 ແລະ 29 ກັນຍາ 2021)

ງົບປະມານທັງໝົດທີ່ອະນຸມັດ: **155,320** USD ລວມ **10%** (ລວມເງິນແຮ)

ງົບປະມານຕົວຈິງທັງໝົດທີ່ໄດ້ຮັບຈາກ ຄສລ2: **155,320** USD

ລາຍຈ່າຍຕົວຈິງທັງໝົດ: **155,320** USD

ຍອດຄົງເຫລືອງົບປະມານ (ເປັນເງິນໂດລາ): **00** USD

ໂຄງການຍ່ອຍ ຈະເຮັດຫຍັງກັບທຶນທີ່ເຫລືອ: (ໝາຍ ☑ ເອົາ 1 ທາງເລືອກ ລຸ່ມນີ້)

☐ ສົ່ງທຶນທີ່ເຫລືອຄືນໃຫ້ໂຄງການແມ່ ຄສລ2

☐ ນຳໃຊ້ເພື່ອຈຸດປະສົງອື່ນໆ, ໃຫ້ລະບຸ________________________________________

## II. ຜົນການຈັດຕັ້ງປະຕິບັດໂຄງການຍ່ອຍ

2.1. ວິເຄາະຈຸດປະສົງຂອງໂຄງການຍ່ອຍ ແລະ ສະຖານະຜົນສຳເລັດຂອງການຈັດຕັ້ງປະຕິບັດ.
ໃສ່ລາຍການ ຈຸດປະສົງ ຊຶ່ງກຳນົດໃນບົດສະເໜີໂຄງການທີ່ອະນຸມັດ ແລະສະຖານະຜົນສຳເລັດ:

| ຈຸດປະສົງຂອງໂຄງການຍ່ອຍ | ຄວາມຄືບໜ້າຕົວຈິງ ທີ່ບັນລຸໄດ້ ໃນຕອນທ້າຍຂອງໂຄງການຍ່ອຍ | ເຫດຜົນທີ່ບໍ່ສາມາດບັນລຸໄດ້ ຕາມຈະປະສົງ |
|---|---|---|
| 1.ເພື່ອເພີ່ມຄວາມສາມາດ ໃຫ້ ກຜງ ໃນການປະສານງານ, ຕິດຕາມ ແລະ ປະເມີນຜົນຂອງໂຄງ ການ | ອີງຕາມພາລະບົດບາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມແຜນການ ແລະ ການເງິນ ສະບັບເລກທີ 3881/ກປ, ລົງວັນທີ 29 ສິງຫາ 2017. ໜ້າທີ່ຫຼັກອັນນຶ່ງກໍ່ແມ່ນ ການປະສານງານ ແລະ ການຕິດຕາມການຈັດຕັ້ງປະຕິບັດໂຄງການ ໃນຂະແໜງກະສິກຳ ແລະ ປ່າໄມ້. | |

| | | |
|---|---|---|
| ລົງທຶນ ໂດຍສຸມໃສ່ ໂຄງການຍ່ອຍທີ່ນອນ ໃນ **LENS2** ພາຍໃຕ້ ຄວາມຮັບຜິດຊອບ ຂອງກະຊວງ ກະສິກຳ ແລະ ປ່າໄມ້ | ໃນໄລຍະຜ່ານມາ ເຫັນໄດ້ວ່າພະນັກງານທີ່ຮັບຜິດຊອບດ້ານນີ້ ແມ່ນມີຄວາມຈຳກັດດ້ານຄວາມສາມາດ ແລະ ປະລິມານ.<br>ພາຍໃຕ້ກອບສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງດ້ານການວາງແຜນ, ປະສານງານ, ຕິດຕາມ ແລະ ປະເມີນຜົນ ຂອງໂຄງການລົງທຶນ ໃນຂະແໜງກະສິກຳ ແລະ ປ່າໄມ້ ໂດຍສຸມໃສ່ໂຄງການທີ່ນອນໃນ (LENS2), ກົມແຜນການ ແລະ ການເງິນ ໄດ້ຈັດຝຶກອົບຮົມໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໃນຫົວຂໍ້ຕ່າງໆ ເຊັ່ນ: ການວາງແຜນ, ການຕິດຕາມ ແລະ ປະເມີນຜົນ ລວມເຖິງການນຳໃຊ້ລະບົບຕິດຕາມ ການຈັດຕັ້ງປະຕິບັດໂຄງການ (ລະບົບ ProMIS2) ທີ່ກະຊວງກະສິກຳ ແລະ ປ່າໄມ້ສ້າງຂຶ້ນ ໂດຍມີການຈັດເປັນຂັ້ນເປັນເຂດ ແລະ ເປັນແຕ່ລະໂຄງການຍ່ອຍ ທີ່ໄດ້ຮັບທຶນຈາກ LENS2 ໂດຍນັກວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 449 ຄົນ (ຍິງ 94 ), ຢູ່ຂັ້ນສູນກາງ ຍັງໄດ້ໃຫ້ພະນັກງານ ຈຳນວນ 15 ທ່ານ (ຍິງ12) ເຂົ້າຮຽນພາສາອັງກິດ. ນອກນັ້ນ ຍັງໄດ້ສືບຕໍ່ເຜີຍແຜ່ ການນຳໃຊ້ລະບົບ ProMIS2 ອອກສູ່ວົງກວ້າງ ໂດຍສະເພາະບັນດາໂຄງການ ODA ໃນຂະແໜງກະສິກຳ ແລະ ປ່າໄມ້.<br>ນອກຈາກ ການຝຶກອົບຮົມໃນຫົວຂໍ້ຕ່າງໆແລ້ວ, ທີມງານ ກຜງ ໄດ້ມີການລົງຊຸກຍູ້ຕິດຕາມ ແລະ ລົງທັດສະນະສຶກສາ ເບິ່ງການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍ ຢູ່ ຫ້ອງການປະສານງານຕ່າງໆ ລວມໄປເຖິງເບິ່ງສະຖານທີ່ຈັດຕັ້ງປະຕິບັດຕົວຈິງ ທີມງານ ກຜງ ໄດ້ສົມທົບກັບບັນດາຜູ້ຮັບຜິດຊອບໂຄງການຍ່ອຍ ໃນການກວດເບິ່ງແຜນກິດຈະກຳ ແລະ ການນຳໃຊ້ງົບປະມານ ເຮັດໃຫ້ເຫັນໄດ້ສະພາບຈຸດດີ ຈຸດອ່ອນຂອງບັນດາໂຄງການຍ່ອຍ (ຍັງມີບາງໂຄງການ ການຈັດຕັ້ງປະຕິບັດກິດຈະກຳ ຍັງບໍ່ບັນລຸຕາມແຜນທີ່ວາງໄວ້) ພ້ອມນັ້ນ ກໍ່ໄດ້ມີການແນະນຳ ວິທີການປັບປຸງ ເພື່ອໃຫ້ບັນດາໂຄງການບັນລຸຕາມແຜນ. ຜ່ານການຈັດຕັ້ງປະຕິບັດ ວຽກງານຕົວຈິງເຫັນໄດ້ວ່າ: ການຄຸ້ມຄອງໂຄງການ ໃນຂະແໜງ ກປ ຫັນເຂົ້າສູ່ລະບົບ, ມີລະບອບການລາຍງານ, ສາມາດຮູ້ໄດ້ເຖິງຜົນການຈັດຕັ້ງປະຕິບັດໂຄງການເປັນແຕ່ລະໄລຍະ ແລະ ສາມາດສ້າງເປັນບົດລາຍງານການນຳກະຊວງຢ່າງເປັນປົກກະຕິ. | |

2.2. ວິເຄາະຜົນໄດ້ຮັບຫຼັກ ຂອງໂຄງການຍ່ອຍ ແລະ ສະພາບຜົນສຳເລັດ.

ໃສ່ລາຍການ ຜົນໄດ້ຮັບຫຼັກ ຊຶ່ງກຳນົດໃນບົດສະເໜີໂຄງການທີ່ອະນຸມັດ ແລະສະຖານະຜົນສຳເລັດ:

| ຜົນໄດ້ຮັບຫຼັກຂອງ ໂຄງການຍ່ອຍ | ຕົວຊີ້ວັດຜົນໄດ້ຮັບຫຼັກ ທີ່ບັນລຸໄດ້ ໃນຕອນທ້າຍຂອງໂຄງການຍ່ອຍ | ເຫດຜົນທີ່ບໍ່ສາມາດ ບັນລຸໄດ້ ຜົນໄດ້ຮັບ ທີ່ກຳນົດ |
|---|---|---|

| | | |
|---|---|---|
| **SP Outcome Indicator 1.** Percentage increase of the score of functional capacity of DOPF (annual)<br>ດັດສະນີຄວາມສາມາດ ຂອງ ພງ ກົມແຜນການ-ການເງິນໄດ້ເພີ່ມຂຶ້ນ | ການຈັດຕັ້ງປະຕິບັດໂຄງການຍ່ອຍ LENS 027 ໃນໄລຍະ (3 ປີ) ແຕ່ເລີ່ມຕົ້ນ(ປີ 2019) ຈັດຕັ້ງປະຕິບັດຈົນຮອດຊ່ວງທ້າຍຂອງໂຄງການ(ປີ 2021) ໃນດ້ານການສ້າງຄວາມອາດສາມາດ ໃຫ້ແກ່ພະນັກງານ ກົມແຜນການ ແລະ ການເງິນ ແລະ ຄູ່ຮ່ວມງານທີ່ຢູ່ຂັ້ນແຂວງ ແລະ ເມືອງ ໂດຍສະເພາະແມ່ນວຽກງານ ດ້ານການຝຶກອົບຮົມດ້ານຕ່າງໆ, ການທັດສະນະສຶກສາ ແລະ ກອງປະຊຸມແລກປ່ຽນບົດຮຽນ ໃນການເພີ່ມຂີດຄວາມສາມາດຂອງພະນັກງານ ເພື່ອ ເຮັດໃຫ້ການຈັດຕັ້ງປະຕິບັດ ວຽກງານໃຫ້ໄດ້ຮັບຜົນສໍາເລັດ ແລະ ມີປະສິດທິພາບສູງ ຄາດໝາຍຂອງໂຄງການແມ່ນ ໃຫ້ບັນລຸ 56% ເຊິ່ງຜົນໄດ້ຮັບທີ່ພົ້ນເດັ່ນມີຄື:<br>1. 25% ຂອງຈໍານວນພະນັກງານ ກຜງ ໄດ້ຮັບການຝຶກອົບຮົມໃນຫົວຂໍ້ຕ່າງໆ ລວມເຖິງເຂົ້າຮ່ວມກິດຈະກໍາທີ່ກ່ຽວຂ້ອງກັບວຽກງານຕິດຕາມ ແລະ ປະເມີນຜົນ ແລະ ນໍາເອົາບົດຮຽນເລົ່ານັ້ນ ໄປນໍາໃຊ້ເຂົ້າໃນວຽກງານທີ່ຕົນຮັບຜິດຊອບ ແລະ ຂະຫຍາຍໄປສູ່ຂັ້ນແຂວງ ແລະ ເມືອງ. ປະຈຸບັນ ກຜງ ມີພະນັກງານທັງໝົດ 83 ຄົນ ໃນ 07 ພະແນກ 01 ສູນ. ໃນນັ້ນ ພະນັກງານຈໍານວນ 30 ຄົນ ໄດ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການ ເຊັ່ນ: ເປັນຄູຝຶກຈໍານວນ 15 ຄົນ, ເຂົ້າຝຶກອົບຮົມໃນຫົວຂໍ້ຕ່າງໆ ເຊັ່ນ: ວຽກງານການວາງແຜນ ແລະ ການຕິດຕາມປະເມີນຜົນ 08 ຄົນ, ການທົດລອງນໍາໃຊ້ລະບົບຕິດຕາມຂອງກະຊວງ 10 ຄົນ. ນອກນັ້ນ ຍັງໄດ້ເຂົ້າຮ່ວມຍົກລະດັບທາງດານພາສາອັງກິດ 15 ຄົນ ແລະ ການທັດສະນະສຶກສາໃນເຂດປ່າສະຫງວນຕ່າງໆຈໍານວນ 45 ຄົນ. ສະຫຼຸບແລ້ວການຈັດຕັ້ງໜ້າວຽກດັ່ງກ່າວແມ່ນມີຕົວເລກເພີ່ມຂຶ້ນຈາກ ລະດັບ 2 ໃນປີ 2019 ມາເປັນລະດັບ 5 ໃນປີ 2021. ຜົນສໍາເລັດດັ່ງກ່າວ ໄດ້ສະແດງອອກໃນການຈັດ ຕັ້ງວຽກງານຕົວຈິງ ພະນັກງານ ກົມແຜນການ ແລະ ການເງິນ ມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ໜ້າວຽກທີ່ຕົນຮັບຜິດຊອບ ເປັນຢ່າງດີ.<br>2. ໄປຄຽງຄູ່ກັບການພັດທະນາດ້ານບຸກຄະລາກອນ, ກຜງ ໄດ້ຮ່ວມມືກັບ FAO ໃນການພັດທະນາລະບົບການຕິດຕາມປະເມີນຜົນ(ProMIS2) ທີ່ທັນສະໃໝ ເພື່ອໃຊ້ເຂົ້າໃນການຕິດຕາມການຈັດຕັ້ງປະຕິບັດໂຄງການເປັນແຕ່ລະໄລຍະ ໂດຍມາຮອດປັດຈຸບັນລະບົບດັ່ງກ່າວໄດ້ສໍາເລັດໂດຍພື້ນຖານ ແລະ ຫາໄດ້ທົດລອງນໍາໃຊ້ກັບບັນດາໂຄງການ ODAທີ່ຈັດຕັ້ງໃນຂະແໜງການການສິກໍາ ແລະ ປ່າໄມ້ ລວມໄປເຖິງ 14 ໂຄງການຍ່ອຍທີ່ໄດ້ຮັບທຶນຈາກ LENS2 ມາຮອດປັດຈຸບັນມີ 50 ໂຄງການ ໃນຈໍານວນ 68 ໂຄງການ ທີ່ນອນຢູ່ໃນບັນດາກົມ, ສະຖາບັນ, ຫ້ອງການກອງທຶນ ລວມໄປເຖິງ ພະແນກ ກປ ແຂວງ ຈໍານວນ | |

| | | |
|---|---|---|
| | ນຶ່ງ ທີ່ມີການທົດລອງນຳໃຊ້ລະບົບ (ProMIS2) ໃນເບື້ອງຕົ້ນ ໂດຍສະເພາະແມ່ນການນຳຂໍ້ມູນເບື້ອງຕົ້ນຂອງໂຄງການເຂົ້າໃນ ລະບົບ (Projects profile) ແລະ ກຳລັງມີການສືບຕໍ່ຝຶກ ອົບຮົມໃນການເຕີ່ມຂໍ້ມູນອື່ນໆ ຂອງໂຄງການເຂົ້າໃນລະບົບຢ່າງ ລະອຽດ. ສະຫຼຸບແລ້ວການຈັດຕັ້ງໜ້າວຽກດັ່ງກ່າວແມ່ນມີຕົວ ເລກເພີ້ມຂຶ້ນຈາກ ລະດັບ 2 ໃນປີ 2019 ມາເປັນລະດັບ 6 ໃນ ປີ 2021 ພາຍຫຼັງລະບົບດັ່ງກ່າວໄດ້ຮັບການເຜີຍແຜ່ ແລະ ຖືກ ນຳໃຊ້ຕົວຈິງ, ຜົນສຳເລັດດັ່ງກ່າວໄດ້ສະແດງອອກໃຫ້ເຫັນໃນຖານ ຂໍ້ມູນຢູ່ໃນລະບົບມີຄວາມຊັດເຈັນ ແລະ ສາມາດນຳໃຊ້ເຂົ້າໃນ ການຕິດຕາມໄດ້.<br>3. ກຜງ ໄດ້ມີການຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການກໍ່ຄື ງົບປະມານຈາກບັນດາຜູ້ຮ່ວມງານ ໃນການພັດທະນາ ແລະ ບັນດາໂຄງການຕ່າງໆ ທີ່ພວມຈັດຕັ້ງປະຕິບັດ ໃນຂະແໜງກະສິ ກຳ ແລະ ປ່າໄມ້ ຊຶ່ງສະແດງອອກຄື: ໄດ້ຮັບການສະໜັບສະ ໜູຈາກ IFAD ໂດຍຜ່ານໂຄງການກະສິກຳ ເພື່ອໂພສະນາການ ແລະ ສະໜັບສະໜູນດ້ານເຕັກນິກ ຈາກ FAO ໃນການ ພັດທະນາລະບົບ ProMIS2 ຈຳນວນ 500.000ໂດລາ. ການ ນຳໃຊ້ງົບປະມານຈາກ LENS2 ໃນການສ້າງຄວາມອາດສາມາດ ໃຫ້ພະນັກງານລັດ ແລະ ຈັດຫາເຄື່ອງມື ອຸປະກອນທີ່ຈຳເປັນ ໃນ ການຈັດຕັ້ງປະຕິບັດວຽກງານ. ໃນປີ 2019 ກຜງ ຄວາມສາມາດ ເຂົ້າເຖິງແຫຼ່ງທຶນ ຈັດຢູ່ໃນລະດັບ 1 ຂອງດັດສະນີຄວາມສາມາດ ແຕ່ຕົກມາຮອດ 2021 ແມ່ນເພີ້ມຂຶ້ນໃນລະດັບ 4. ສະເພາະ ຄວາມສາມາດເຂົ້າຫາແຫຼ່ງທຶນອື່ນໆ ຊຶ່ງສະແດງອອກໃນການໄດ້ ຮັບການສະໜັບສະໜູນທາງດ້ານຕ່າງໆ ຈາກບັນດາໂຄງການ ກໍ່ຄື ຜູ້ໃຫ້ທຶນ. ນອກນັ້ນ ກຜງ ໄດ້ຮັບງົບປະມານຈຳນວນນຶ່ງ ໂດຍ ສະເພາະການສ້າງຄວາມອາດສາມາດໃຫ້ພະນັກງານລັດ ດ້ານວິຊາ ສະເພາະຕ່າງໆ.<br>4. ຄວາມສາມາດໃນການວາງແຜນ, ກຜງ ໄດ້ມີການປັບປຸງ ຄວາມ ອາດສາມາດ ແລະ ກົນໄກໃນການສະຫຼຸບ ແລະ ສ້າງແຜນຕ່າງໆ ໂດຍແມ່ນພະແນກແຜນການ ເປັນຜູ້ຮັບຜິດຊອບ ຊຶ່ງມີການສະ ໜັບສະໜູນຈາກບັນດາກົມ ແລະ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ໃນການສ້າງແຜນ ໂດຍມາຮອດປະຈະບັນແມ່ນສຳເລັດ ການສ້າງແຜນ 5 ປີ (2021-2025) ຂອງຂະແໜງການ ແລະ ໄດ້ຖືກຮັບຮອງຢ່າງເປັນທາງການ ຈາກລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ເປັນທີ່ຮຽບຮ້ອຍ. ຄວາມສາມາດໃນການ ວາງແຜນ ເຫັນໄດ້ວ່າມີລັກສະນະຄົງທີຕະຫລອດການຈັດຕັ້ງ ປະຕິບັດໂຄງການຄືໃນປີ 2019 ກຜງ ຈັດຢູ່ໃນລະດັບ 2 ຂອງ | |

| | | |
|---|---|---|
| | ດັດສະນີຄວາມສາມາດ ແຕ່ຕົກມາຮອດ 2021 ແມ່ນເພີ້ມຂຶ້ນໃນລະດັບ 8.<br>5. ໃນແຕ່ລະປີ ກົມແຜນການ ແລະ ການເງິນ ໄດ້ມີການປະສານງານພົວພັນກັບຫລາຍອົງການຈັດຕັ້ງສາກົນ ລວມທັງບັນດາຜູ້ໃຫ້ທຶນຕ່າງໆ ໃນການກະກຽມເອກະສານການຮ່ວມມືຕ່າງໆ ໂດຍສະເພາະສັນຍາການຮ່ວມມື ແລະ ຊ່ວຍເຫຼືອ ໃນຮູບແບບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ໃນການສະໜັບສະໜູນການຈັດຕັ້ງປະຕິບັດໂຄງການ ເພື່ອມາສະໜັບສະໜູນແຜນງານກະສິກຳ ແລະ ປ່າໄມ້ ໃນປີ 2019 ກຜງ ຈັດຢູ່ໃນລະດັບ 2 ຂອງດັດສະນີຄວາມສາມາດ ແຕ່ຕົກມາຮອດ 2021 ແມ່ນເພີ້ມຂຶ້ນໃນລະດັບ 5. | |
| **SP Outcome Indicator 2.** Staff of SDA and SDA partner institutions that received formal short training course or participate in study tours (cumulative) (annual)<br><br>ຈຳນວນ ພງ ຂອງກົມແຜນການ ແລະ ຄູ່ຮ່ວມງານໄດ້ຮັບການຝຶກອົບຮົມໃນໄລຍະສັ້ນ ແລະ ທັດສະນະສຶກສາ<br><br>ຜູ້ໄດ້ຮັບຜົນປະໂຫຍດໂດຍກົງໂດຍສະເພາະແມ່ນຜູ້ຍິງ 20% ທີ່ວັດແທກໂດຍການເຂົ້າຮ່ວມຝຶກອົບຮົມ ແລະ ໄປທັດສະນະສຶກສາຕ່າງໆ (ຕົວຊີ້ວັດຂອງ LENS2) | ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ, ກົມແຜນການ ແລະ ການເງິນ ໄດ້ເລັງໃສ່ ການເພີ້ມຂີດຄວາມສາມາດໃຫ້ພະນັກງານທີ່ຮັບຜິດຊອບວຽກງານ ການວາງແຜນ ແລະ ການຕິດຕາມປະເມີນຜົນ, ໂດຍໄດ້ມີຜູ້ເຂົ້າຮ່ວມທັງໝົດ **640 ຄົນ(ຍິງ 186 )** ຜ່ານການຝຶກອົບຮົມເຫັນໄດ້ວ່າບັນດາຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ວຽກງານດັ່ງກ່າວດີຂຶ້ນ ແລະ ອີກສ່ວນນຶ່ງຄາດວ່າຈະສາມາດນຳໄປຝັນຂະຫຍາຍໃຫ້ເພືອນຮ່ວມງານທີ່ຍັງບໍ່ໄດ້ເຂົ້າຝຶກ.<br>ຫົວຂໍ້ໃນການຝຶກອົບຮົມປະກອບມີ:<br>1. ວຽກງານການວາງແຜນ ແລະ ການຕິດຕາມປະເມີນຜົນ ຈັດຂຶ້ນ **06** ຄັ້ງ ມີຜູ້ເຂົ້າຮ່ວມ 195 ຄົນ, ຍິງ 54 ຄົນ<br>ຜົນໄດ້ຮັບຈາກການຝຶກຫົວຂໍ້ດັ່ງກ່າວເຫັນໄດ້ວ່າຜູ້ເຂົ້າຮ່ວມມີຄວາມເຂົ້າໃຈໃນການນຳເອົາບົດຮຽນ ໄປຜັນຂະຫຍາຍ ຫຼື ສືບຕໍ່ຖ່າຍທອດໃຫ້ ເພື່ອນຮ່ວມງານ ໃນຮູບແບບຝຶກອົບຮົມກັບທີ່.<br>2. ການນຳໃຊ້ລະບົບຕິດຕາມ ແລະ ປະເມີນຜົນຂອງກະຊວງ ກປ (ProMIS2) ຈັດຂຶ້ນ **08** ຄັ້ງ, ມີຜູ້ເຂົ້າຮ່ວມ 254 ຄົນ ຍິງ 67 ຄົນ ຜ່ານການຝຶກຜູ້ເຂົ້າຮ່ວມມີຄວາມສົນໃຈ ແລະ ນຳໃຊ້ລະບົບດັ່ງກ່າວ ເຂົ້າໃນວຽກງານການຕິດຕາມຂອງໂຄງການຕົນເອງຮັບຜິດຊອບ ເພາະມັນເປັນເຄື່ອງມືທີ່ທັນສະໃໝ ຊ່ວຍໃນການສັງລວມຂໍ້ມູນການຈັດຕັ້ງປະຕິບັດໂຄງການ ເຖິງຢ່າງໃດກໍ່ຕາມເພື່ອຮັບປະການຄວາມຊຳນານ ຈຳເປັນຕ້ອງໄດ້ມີການຈັດຝຶກກັບທີ່ (ທັງຝຶກ ແລະ ເຮັດຕົວຈິງໄປພ້ອມໆກັນ)<br>ພະນັກງານ ກຜງ ເຂົ້າຮ່ວມຝຶກອົບຮົມການຄຸ້ມຄອງບໍລິຫານໂຄງການ, ບັນຊີ-ການເງິນ, ການຈັດຊື້-ຈັດຈ້າງ, ການຂຽນບົດສະຫຼູບປິດໂຄງການ, ຍົກລະດັບທາງດ້ານພາສາອັງກິດ ຈຳນວນ 04 ເທີມ ຢູ່ວິທະຍາໄລ ໂລໂກຼດ ມີຜູ້ເຂົ້າຮ່ວມທັງໝົດ 15 ຄົນ ຍິງ 10 ຄົນ ຜ່ານການຮຽນເຫັນໄດ້ວ່າພະນັກງານມີຄວາມສາມາດໃນການ | |

| | | |
|---|---|---|
| | ນຳໃຊ້ພາສາອັງກິດ ໂດຍພື້ນຖານ.<br>ການທັດສະນະສຶກສາ ແມ່ນເປັນວຽກນຶ່ງທີ່ຕິດພັນກັບການສ້າງຂີດຄວາມອາດສາມາດໃຫ້ພະນັກງານ ແລະ ເພີ້ມຄວາມເຂົ້າໃຈໃຫ້ພະນັກງານການນຳຂັ້ນກົມ ເພື່ອສຳພັດເບິ່ງພື້ນທີ່ຕົວຈິງ ໂດຍສະເພາະວຽກງານພັດທະນາຊຸມຊົນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ໂດຍການເຂົ້າຮ່ວມການທັດສະນະສຶກສາ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ LENS2 ເຊັ່ນ: ອຸທິຍານແຫ່ງຊາດຫີນໜາມໜໍ່, ເມືອງບົວລະພາ ແຂວງຄຳມ່ວນ, ອຸທິຍານແຫ່ງຊາດນຳແອັດ-ພູເລີຍ, ແຂວງຫົວພັນ ແລະ ເຂດອະນຸລັກ ຕາດກວາງຊີ ແຂວງຫຼວງພະບາງ ໂດຍມີຜູ້ເຂົ້າຮ່ວທັງໝົດ 81 ຄົນ (ຍິງ29)<br>ນອກນັ້ນ ກໍ່ຍັງມີການຈັດກອງປະຊຸມ ສະຫຼຸບລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດໂຄງການຍ່ອຍ(14ໂຄງການຍ່ອຍເຂົ້າຮ່ວມ) ໄດ້ຮັບທຶນສະໜັບສະໜູນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ (ຄສລ2) 2 ຄັ້ງຕໍ່ປີ ເພື່ອມີການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ.<br>ມີການລົງຊຸກຍູ້ຕິດຕາມການຈັດຕັ້ງບັນດາໂຄງການຍ່ອນ ເປັນແຕລະໄລຍະ ຈຸດປະສົງກໍ່ເພື່ອຕິດຕາມຄວາມຄືບໜ້າ ລວມໄປເຖິງເຫັນໄດ້ບັນດາຂໍ້ຄົງຄ້າງທີ່ບັນດາໂຄງການຍ່ອນພົບພໍເວລາຈັດຕັ້ງປະຕິບັດຕົວຈິງ. ນອກຈາກນັ້ນ ຍັງໄດ້ມີການປຶກສາຫາລື ແລະ ນຳເອົາຂໍ້ມູນມາລາຍງານຂັ້ນທີ່ຕັດສິນໄດ້ ຜ່ານການຈັດຕັ້ງປະຕິບັດຕົວຈິງ ສາມາດລົງຕິດຕາມໂຄງການຍ່ອນໄດ້ 12 ຄັ້ງ ມີຜູ້ເຂົ້າຮ່ວມ 95 ຄົນ(ຍິງ 24), ມີບາງຄັ້ງໄດ້ມີການນຳຂອງກົມແຜນການ ແລະ ການເງິນ, ກົມທີ່ກຽວຂ້ອງ ລວມເຖິງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມໄດ້ເຂົ້າຮ່ວມ ນຳພາໃນການລົງຊຸກຍູ້ຕິດຕາມ ບັນດາໂຄງການຍ່ອນ ຂອງຂະແໜງການກະສິກຳ ແລະ ປ່າໄມ້. | |

2.3. ວິເຄາະຜົນໄດ້ຮັບຍ່ອຍ ຂອງໂຄງການຍ່ອຍ ແລະ ສະພາບຜົນສຳເລັດ.

ໃສ່ລາຍການ ຜົນໄດ້ຮັບຍ່ອຍ ຊຶ່ງກຳນົດໃນບົດສະເໜີໂຄງການທີ່ອະນຸມັດ ແລະສະຖານະຜົນສຳເລັດ:

| ຜົນໄດ້ຮັບຍ່ອຍຂອງໂຄງການຍ່ອຍ | ຕົວຊີ້ວັດຜົນໄດ້ຮັບຍ່ອຍ ທີ່ບັນລຸໄດ້ ໃນຕອນທ້າຍຂອງໂຄງການຍ່ອຍ | ເຫດຜົນທີ່ບໍ່ສາມາດບັນລຸໄດ້ຕາມຜົນໄດ້ຮັບຍ່ອຍ ທີ່ກຳນົດ |
|---|---|---|
| **ອົງປະກອບ 1:**<br>1.1 ສ້າງບົດລາຍງານໃນການຕິດຕາມ ແລະ ປະເມີນຜົນ ສຳລັບກຜງ ທີ່ສາມາດນຳໃຊ້ໄດ້ ລວມທັງລະບົບການ | ກຜງ ໄດ້ ມີການກຳນົດຮູບແບບການສ້າງບົດລາຍງານໃນການຕິດຕາມ ແລະ ປະເມີນຜົນ ໂດຍອີງໃສ່ ລະບົບ ProMIS2 ເພື່ອສັງລວມຂໍ້ມູນຈາກບັນດາໂຄງການຕ່າງໆ ຊຶ່ງມາຮອດປະຈຸບັນແມ່ນສຳເລັດໂດຍພື້ນຖານ.<br>ກຜງ ສາມາດສ້າງບົດລາຍງານປະຈຳ 6ເດືອນ ການຈັດຕັ້ງປະຕິບັດໂຄງການຍ່ອຍ ໃນຂະແໜງກປ ທັງສູນກາງ ແລະ ແຂວງ ໃຫ້ການນຳກະຊວງ ແລະ ກົມ. | |

| | | |
|---|---|---|
| ລາຍງານພາຍໃນທີ່ເປັນມາດຕະຖານທີ່ສາມາດລາຍງານພາຍ ໃນ ແລະ ຕ່າງປະເທດໄດ້. | ບັນດາໂຄງການ 14 ຍ່ອຍສາມາດສະໜອງຂໍ້ມູນທີ່ຕ້ອງ ການເຂົ້າໃນບົດລາຍງານສົ່ງໃຫ້ ກຜງ ກໍ່ຄື ຫ້ອງການກອງທຶນ ຕາມຮູບແບບແລະ ເວລາທີ່ກຳນົດ. ຕະຫຼອດການຈັດຕັ້ງປະຕິບັດໂຄງການ ກຜງ ສາມາດສ້າງບົດລາຍງານໃຫ້ການນຳກະຊວງ ຈຳນວນ 4 ສະບັບ ທີ່ກ່ຽວຂ້ອງການການຈັດຕັ້ງປະຕິບັດໂຄງການ ທີ່ນຳໃຊ້ທຶນຈາກ LENS2 ແລະ ໄດ້ຮັບທິດຊີ້ນຳ ເປັນແຕ່ລະໄລຍະ.<br>ເຖິງແມ້ວ່າການສ້າງຮູບແບບການລາຍງານຍັງບໍ່ທັນສົມບູນດີ ເນື່ອງຈາກວ່າ LENS2-027 ໄດ້ຈັດຕັ້ງລ່າຊ້າ ມາຮອດປະຈຸບັນ ລະບົບການລາຍງານຍັງມີການສືບຕໍ່ປັບປຸງໃຫ້ແທດເໝາະກັບແຕ່ລະໄລຍະ. ຜົນຈາກການຈັດຕັ້ງກິດ ຈະກຳ ດັ່ງກ່າວເຮັດໃຫ້ ກຜງ ກໍ່ຄື ກະຊວງ ກປ ໄດ້ຮັບຂໍ້ມູນຂ່າວສານຈາກການຈັດ ຕັ້ງປະຕິບັດໂຄງການຕ່າງໆ ໂດຍສະ ເພາະ ຈາກ 14 ໂຄງການຍ່ອຍ ຢ່າງເປັນປົກກະຕິ ເຫັນໄດ້ຄວາມຄືບໜ້າ ແລະ ສິ່ງທີ່ຄົງຄ້າງເປັນແຕ່ລະໄລຍະ.<br>ຜົນຈາກການຈັດຕັ້ງປະຕິບັດຕົວຈິງ:<br>ເປົ້າໝາຍຕັ້ງໄວ້: 100%<br>ສາມາດປະຕິບັດໄດ້ 100% | |
| 1.2 ຮ່າງຂໍ້ແນະນຳວຽກງານແຜນການຈາກກະຊວງກະສິກຳ ແລະ ປ່າໄມ້ ທີ່ປັບປຸງແລ້ວຈະຖືກເຜີຍແຜ່ໃຫ້ບັນດາໂຄງການຍ່ອຍ, ແຂວງ ແລະ ເມືອງ | ໃນໄລຍະການຈັດຕັ້ງປະຕິບັດໂຄງການ ກຜງ ໄດ້ສ້າງຄູ່ມື ແລະ ບົດແນະນຳຕ່າງໆ ເຊັ່ນ:<br>1. ຄູ່ມືການວາງແຜນ ແລະ ການຕິດຕາມປະເມີນຜົນ 1 ສະບັບ ຊຶ່ງໄດ້ຮັບການຮັບຮອງຄັ້ງວັນທີ: 30/ 11 /2020 ເພື່ອນຳໃຊ້ເປັນທາງການ. ຈຸດປະສົງຂອງການສ້າງຄູ່ມືດັ່ງກ່າວກໍ່ເພື່ອໃຫ້ເປັນເອກະສານແນະນຳບັນດາໜ່ວຍງານ, ວິຊາການວາງແຜນໃຫ້ຮູ້ເຖິງວິທີການ ແລະ ການດຳເນີນ ການວາງແຜນ ອອກແບບໂຄງການ ລວມໄປເຖິງການວິເຄາະວິໃຈ ແລະ ວິທີການຕິດຕາມ ແລະ ປະເມີນຜົນໃດ້ຮັບ ທີ່ໄດ້ຈາກການຈັດຕັ້ງປະຕິບັດໂຄງການ/ແຜນງານ. ເນື້ອໃນໃນປຶ້ມຄູ່ມືແນະນຳ ສະບັບນີ້ ໄດ້ລຽບລຽງມາຈາກເອກະສານ ທີ່ເຄີຍໃຊ້ເຂົ້າໃນການສິດສອນແນະນຳ ສຳລັບພະນັກງານທີ່ເຮັດວຽກກ່ຽວກັບການວາງແຜນ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງ ການ ໃນຂະແໜງການກະສິກຳ ແລະ ປ່າໄມ້ ໃນຂອບເຂດ ທົ່ວປະເທດ. ຊຶ່ງເນື້ອໃນສຳຄັນປະກອບມີ: ຂັ້ນຕອນວິທີການອອກແບບໂຄງການ, ການວິເຄາະບັນຫາ, ການພັດທະນາວິທີການແກ້ໄຂ ພ້ອມທັງ ການຕິດຕາມ ແລະ ປະເມີນຜົນ ຫຼື ທີ່ພວກເຮົາໄດ້ຄຸ້ນເຄີຍກັບຄຳວ່າ: ວົງຈອນໂຄງການ ຊຶ່ງໄດ້ແບ່ງເປັນສາມພາກ ຄື: ພາກທີ I ການສ້າງແຜນການ, ແຜນງານ ແລະ ໂຄງການ; ພາກທີ II ການຄຸ້ມຄອງໂຄງການ ແລະ ພາກທີ III ວິທີການຕິດຕາມ | |

| | | |
|---|---|---|
| | ແລະ ປະເມີນຜົນ.<br>2. ບົດແນະນຳຂອງ ລມຕ 01 ສະບັບ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ລະບົບ ProMIS2 ສະບັບເລກທີ0323/ກປ, ລົງ ວັນທີ 25 ກຸມພາ 2021 ຈຸແປະສົງກໍ່ເພື່ອເປັນບ່ອນອີງໃຫ້ບັນ ພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ແລະ ຕິດຕາມ ໂຄງການ ເຂົ້າໃຈເຖິງພາລະບົບບາດ ແລະ ພັນທະ ຂອງຕົນເອງ ຕໍ່ກັບການນຳໃຊ້ລະບົບ ແລະ ການຜັນຂະຫຍາຍເຂົ້າໃນ ການຈັດຕັ້ງປະຕິບັດຕົວິງ. ມາຮອດປະຈຸບັນເອກະສານດັ່ງກ່າວ ໄດ້ຮັບການເຜີຍແຜ່ ແລະ ຮັບຮູ້ຈາກບັນດາພາກສ່ວນ ກ່ຽວຂ້ອງທັງສູນກາງ, ທ້ອງຖິ່ນ ລວມເປັນເຖິງບັນດາໂຄງການ ທີ່ຈັດຕັ້ງໃນຂະແໜງກະສິກຳ ແລະ ປ່າໄມ້.<br>3. ຄູ່ມືນຳໃຊ້ລະບົບ ProMIS2.<br>**ຈຸດປະສົງ**<br>ເພື່ອກຳນົດເຄື່ອງມື, ລະບອບແບບແຜນ ,ກົນໄກການຄຸ້ມຄອງ , ຕິດ ຕາມຂໍ້ມູນການຈັດຕັ້ງປະຕິບັດໂຄງ ການໃຫ້ກະທັດຮັດ ວ່ອງໄວ ,ທັນສະໄໝ ສຳລັບໂຄງການທີ່ນຳໃຊ້ທຶນການຊ່ວຍເຫຼືອ ທາງການເພື່ອການພັດທະນາ ໃນຂະແໜງການກະສິກຳ ແລະ ປ່າໄມ້.<br>ເພື່ອເປັນບ່ອນອີງໃຫ້ບັນດາພາກ ສ່ວນຄຸ້ມຄອງໂຄງການໃນການ ປະຕິບັດວຽກງານຢ່າງຄ່ອງຕົວໃນການຊຸກຍູ້ ຕິດຕາມ, ຄຸ້ມຄອງ ການນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ຮັບປະກັນ ການນຳໃຊ້ທຶນໃຫ້ຖືກ ຕ້ອງຕາມລະບຽບການ ແລະ ມີປະສິດທິ ຜົນ ພ້ອມດຽວກັນ ເພື່ອຮັບປະກັນການລາຍງານສະພາບການ ຈັດຕັ້ງປະຕິບັດບັນດາໂຄງການ/ແຜນງານ ທີ່ໄດ້ຮັບທຶນຊ່ວຍເຫຼືອ ທາງການເພື່ອການພັດທະນາ ໃຫ້ແກ່ລະດັບການນຳຂອງກະຊວງ ກະສິກຳ ແລະ ປ່າໄມ້.<br>**ລະດັບຄາດໝາຍ**<br>ຂະແໜງການກະສິກຳ ແລະ ປ່າໄມ້ ມີເຄື່ອງມືຮັບໃຊ້ໃນການຄຸ້ມ ຄອງ, ກວດກາ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດ ໂຄງການຢ່າງເປັນລະບົບ ແລະ ທັນສະໄໝ.<br>ຮັບປະກັນການລາຍງານຄວາມຄືບໜ້າ ແລະ ການຕິດຕາມຄວາມ ຄືບໜ້າໃນການຈັດຕັ້ງປະຕິບັດບັນດານະໂຍບາຍ, ຍຸດທະສາດ ການພັດ ທະນາ ແລະ ຄາດໝາຍແຜນການທຽບໃສ່ກັບຕົວຊີ້ວັດ ຜົນງານສະເພາະຂອງຂະແໜງການກະສິກຳ ແລະ ປ່າໄມ້ ເປັນຕົ້ນ ແມ່ນ ເປົ້າໝາຍ, ແຜນງານ, ບັນດາໂຄງການທຶນຊ່ວຍເຫຼືອທາງ ການເພື່ອການພັດທະນາ<br>ຮັບປະກັນລະບົບການຂໍທິດຊີ້ນຳ, ການໃຫ້ທິດຊີ້ນຳ ແລະ ການ | |

| | | |
|---|---|---|
| | ອອກມາດຕະການແກ້ໄຂທີ່ຖືກຕ້ອງ ແລະ ທັນສະພາບການ ຕໍ່ກັບ ຂໍ້ຄົງຄ້າງ ແລະ ອຸປະສັກຕ່າງໆທີ່ເກີດຂວາງ ແລະ ຖ່ວງດຶງການຈັດຕັ້ງປະຕິບັດບັນ ດານະໂຍບາຍ ແລະ ຍຸດທະສາດການພັດທະນາ ໂດຍສະເພາະອຸປະ ສັກທີ່ກະທົບໃສ່ການປະຕິບັດເປົ້າໝາຍ, ແຜນງານບັນດາກິດຈະກໍາຂອງໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອ ທາງການເພື່ອການພັດທະນາ.<br>ເປົ້າໝາຍທີ່ຕັ້ງໄວ້: 3<br>ຜົນທີ່ໄດ້ຮັບຕົວຈິງ: 3 | |
| 1.3 ພະນັກງານຂັ້ນແຂວງຢ່າງໜ້ອຍ 35 ຄົນຈະໄດ້ຮັບການຝຶກອົບຮົມເພື່ອຈະກາຍເປັນຄູຝຶກ ແລະ ສາມາດຝຶກຕໍ່ໃຫ້ພະນັກງານຂັ້ນແຂວງ ແລະ ເມືອງ ໃນການຂົ້ນວຽກງານແຜນການ ແລະ ຕິດຕາມ | ໄປຄຽງຄູ່ກັບການຝຶກອົບຮົມໃຫ້ພະນັກງານຂັ້ນສູນກາງ, ພະນັກງານຂັ້ນແຂວງ ແລະ ເມືອງ ທີ່ນອນໃນເປົ້າໝາຍການຈັດຕັ້ງປະຕິບັດໂຄງການ LENS2 ແລະ ໃນທີ່ວຂະແໜງກະສິກໍາ ແລະ ປ່າໄມ້ ໄດ້ເຂົ້າຮ່ວມຝຶກອົບຮົມ ຈໍານວນ 289 (ຍິງ82) ເຫັນໄດ້ວ່າດ້ານຈຳນວນແມ່ນລື່ນເປົ້າ ໝາຍທີ່ວາງໄວ້ ພະນັກງານທີ່ໄດ້ຮັບການຝຶກແມ່ນມາຈາກຂະແໜງແຜນການ, ພະແນກ ກປ ແຂວງ ທີ່ມີການຈັດຕັ້ງປະຕິບັດໂຄງການ LENS2. ສໍາລັບຫົວຂໍ້ທີ່ໄດ້ນໍາໄປຝຶກປະກອບມີ:<br>1) ການວາງແຜນ ແລະ ການຕິດຕາມປະເມີນຜົນ,<br>- ພາກກາງຈັດຢູ່ແຂວງຄໍາມ່ວນ ລະຫວ່າງວັນທີ 24-27 /02/ 2020 ມີຜູ້ເຂົ້າຮ່ວມຈາກ 9 ໂຄງການຍ່ອຍ ມີທັງໝົດ 42 ຄົນ (ຍິງ 19 ທ່ານ);<br>- ພາກເໜືອ ແມ່ນຈັດຢູ່ແຂວງຫຼວງພະບາງ ລະວ່າງວັນທີ 10 ຫາ 13 ມີນາ 2020 ໂດຍມີຜູ້ເຂົ້າຮ່ວມຈາກ 5 ໂຄງການຍ່ອຍ ທີ່ນອນຢູ່ໃນສາມແຂວງພາກເໜືອ ແລະ ໂຄງການ ອຸທິຍານ ນໍ້າແອັດ ພູເລີຍ ເຂົ້າຮ່ວມນໍາ ລວມທັງໝົດ 32 ຄົນ (ຍິງ 8 ທ່ານ)<br>2) ການນໍາໃຊ້ລະບົບຕິດຕາມປະເມີນຜົນຂອງ ກະຊວງ ກະສິກໍາ ແລະ ປ່າໄມ້ (ProMIS2). ນອກນັ້ນຍັງມີບັນດາວິຊາການທີ່ຮັບຜິດຊອບວຽກ M&E ຂອງບັນດາໂຄງການຍ່ອຍ, ບັກມດາກົມ, ສະຖາບັນ ແລະ ພະແນກ ກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ<br>- ພາກກາງຈັດຢູ່ແຂວງຄໍາມ່ວນ ລະຫວ່າງວັນທີ 14-17/02/2021 ມີຜູ້ເຂົ້າຮ່ວມຈາກ 9 ໂຄງການຍ່ອຍຄງການຍ່ອຍ ທີ່ ນອນຢູ່ໃນສາມແຂວງພາກກາງ ແລະ ໂຄງການອຸທິຍານນາກາຍ-ນໍ້າເທີນ ມີທັງໝົດ 45 ຄົນ (ຍິງ 14 ທ່ານ);<br>- ພາກເໜືອ ແມ່ນຈັດຢູ່ ວັງວຽງ ແຂວງ ວຽງຈັນ ລະວ່າງວັນທີ 24-26/02/2021 ໂດຍມີຜູ້ເຂົ້າຮ່ວມຈາກ 5 ໂຄງການຍ່ອຍທີ່ນອນຢູ່ໃນສາມແຂວງພາກເໜືອ ແລະ ໂຄງການ ອຸທິຍານນໍ້າແອັດ-ພູເລີຍ ເຂົ້າຮ່ວມນໍາ ລວມທັງໝົດ 35 ຄົນ (ຍິງ 05 | |

| | | |
|---|---|---|
| | ທ່ານ)<br>- ພະນັກງານພະແນກແຜນການ ບັນດາກົມ ແມ່ນຈັດຢູ່ ວັງວຽງ ແຂວງ ວຽງຈັນ ລະວ່າງວັນວັນທີ 7 ຫາ 9 ກໍລະກົດ 2021 ລວມທັງໝົດ **54** ທ່ານ, ຍິງ **23** ທ່ານ<br>- ພະນັກງານຂະແໜງແຜນການ ບັນດາພະແນກ ກະສິກຳ ແລະ ປ່າໄມ້ ຂອງແຂວງພາກເໜືອ ແມ່ນຈັດຢູ່ ແຂວງ ຫຼວງພະບາງ ລະຫວ່າງວັນທີ 27 ຫາ 30 ກໍລະກົດ 2021 ຜູ້ເຂົ້າຮ່ວມທັງໝົດ 43 ທ່ານ ຍິງ 7 ທ່ານ<br>- ພະນັກງານຂະແໜງແຜນການ ບັນດາພະແນກ ກະສິກຳ ແລະ ປ່າໄມ້ ຂອງແຂວງພາກໃຕ້ ແມ່ນຈັດຢູ່ແຂວງ ບໍລິຄຳໄຊ ໃນ ລະຫວ່າງວັນທີ **19-20** ສິງຫາ 2021 ຜູ້ເຂົ້າຮ່ວມທັງໝົດ 38 ທ່ານ ຍິງ 7 ທ່ານ.<br>ຜ່ານການຝຶກອົບຮົມ ເຫັນໄດ້ວ່າຜູ້ເຂົ້າຮ່ວມມີຄວາມເຂົ້າໃຈໃນການນຳເອົາບົດຮຽນ ໄປຜັນຂະຫຍາຍ ຫຼື ສືບຕໍ່ຖ່າຍທອດໃຫ້ເພື່ອນຮ່ວມງານ ໃນຮູບແບບ ຝຶກອົບຮົມກັບທີ່ ແລະ ສະແດງອອກຢູ່ໃນລະບົບ (ProMIS2) ແມ່ນ ມີຂໍ້ມູນທີ່ບັນດາໂຄງການ ທີ່ພະນັກງານໄດ້ຮັບການຝຶກປ້ອນເຂົ້າ.<br>ຜ່ານການຈັດຕັ້ງປະຕິບັດຕົວຈິງ:<br>ເປົ້າໝາຍທີ່ຕັ້ງໄວ້: 35<br>ຜົນທີ່ໄດ້ຮັບຕົວຈິງ: 289 (ຍິງ82) | |
| 1.4 ພະນັກງານວິຊາການ ຂອງຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ປະມານ 125 ຄົນ, ລວມທັງພະນັກງານໂຄງການຍ່ອຍ ປະມານ 70 ຄົນ ໄດ້ຮັບການຝຶກອົບຮົມ ກ່ຽວກັບວຽກງານແຜນການ, ແລະ ຕິດຕາມກວດກາ. | ເຊັ່ນດຽວກັນກັບພະນັກງານຂັ້ນສູນກາງ ແລະ ເມືອງ, ພະນັກງານຂອງຫ້ອງການ ກປ ເມືອງໃນ 38 ເມືອງຂອບເຂດ 7 ແຂວງທີ່ມີຈັດຕັ້ງປະຕິບັດໂຄງການ LENS2 ກໍ່ໄດ້ຮັບການຝຶກອົບຮົມກ່ຽວກັບ ວຽກງານແຜນການ, ແລະ ຕິດຕາມກວດກາ ໂດຍອີງໃສ່ຂໍ້ມູນຕົວຈິງໃນການຈັດຕັ້ງປະຕິບັດໂຄງການຍ່ອຍມາເປັນບ່ອນອີງໃນການຝຶກ ຜ່ານການຈັດຕັ້ງປະຕິບັດຕົວຈິງ ເຫັນໄດ້ວ່າ ຈຳນວນພະນັກງານວິຊາການທີ່ເຂົ້າຮ່ວມແມ່ນບໍ່ໄດ້ຕາມເປົ້າ ສາເຫດກໍ່ຍ້ອນພະນັກງານທີ່ຮັບຜິດຊອບວຽກດັ່ງກ່າວຂັ້ນເມືອງ ແມ່ນມີຈຳນວນໜ້ອຍ. ຜ່ານການຝຶກຕົວຈິງມີຜູ້ເຂົ້າຮ່ວມ **121 ທ່ານ ຍິງ: 27 ທ່ານ**<br>ການຈັດຕັ້ງປະຕິບັດໂຄງການ ຊື່ງການຈັດຝຶກອົບຮົມໄດ້ແບ່ງເປັນສອງພາກ ແລະ 4 ຄັ້ງຄື:<br>- ຈັດຢູ່ແຂວງ ຄຳມ່ວນ ລະວ່າງວັນທີ 08 ຫາ 09 ມິຖຸນາ 2020 ໂດຍມີຜູ້ເຂົ້າຮ່ວມ ຈາກຫ້ອງການ ກະສິກຳ ແລະ ປ່າໄມ້ 12 ເມືອງ, 2 ແຂວງ(ຄຳມ່ວນ ແລະ ສະຫວັນນະເຂດ), ລວມທັງໝົດ 37 ທ່ານ, ຍິງ 07 ທ່ານ.<br>- ຈັດຢູ່ແຂວງ ບໍລິຄຳໄຊ ລະວ່າງວັນທີ 11 ຫາ 12 ມີນາ 2020 | ສາເຫດກໍ່ຍ້ອນພະນັກງານທີ່ຮັບຜິດຊອບວຽກດັ່ງກ່າວ ແມ່ນມີຈຳນວນໜ້ອຍຢູ່ແຕ່ລະເມືອງເປົ້າໝາຍໂຄງການຍ່ອຍ. |

| | | |
|---|---|---|
| | ໂດຍມີຜູ້ເຂົ້າຮ່ວມຈາກ ຫ້ອງການ ກະສິກຳ ແລະ ປ່າໄມ້ 07 ເມືອງ ລວມທັງໝົດ 24 ທ່ານ, ຍິງ 07 ທ່ານ.<br>- ຈັດຢູ່ແຂວງຫຼວງພະບາງ ລະວ່າງວັນທີ 22 ຫາ 23 ມິຖຸນາ 2020 ໂດຍມີຜູ້ເຂົ້າຮ່ວມຈາກ ຫ້ອງການ ກະສິກຳ ແລະ ປ່າໄມ້ 07 ເມືອງ, 02 ແຂວງ(ວຽງຈັນ ແລະ ຫຼວງພະບາງ), ລວມທັງໝົດ 27 ທ່ານ, ຍິງ 06 ທ່ານ.<br>- ແລະ ຈັດຢູ່ແຂວງ ຫົວພັນ ລະວ່າງວັນທີ 25 ຫາ 26 ມິຖຸນາ 2020 ໂດຍມີຜູ້ເຂົ້າຮ່ວມຈາກຫ້ອງການ ກະສິກຳ ແລະ ປ່າໄມ້ 12 ເມືອງ, 2 ແຂວງ(ຫົວພັນ ແລະ ຊຽງຂວາງ), ລວມທັງໝົດ 33 ທ່ານ, ຍິງ 07 ທ່ານ.<br>ຜ່ານການຝຶກອົບຮົມເຫັນວ່າຜູ້ເຂົ້າຮ່ວມໄດ້ໃຫ້ຄວາມສົນໃຈ ແລະ ມີຄວາມເອົາໃຈໃສ່ ໃນເວລາຝຶກ ຊຶ່ງບາງຄົນແມ່ນເປັນຄັ້ງທຳອິດ ສຳລັບການຝຶກໃນຫົວຂໍ້ດັ່ງກ່າວ ແລະ ເຮັດໃຫ້ຜູ້ເຂົ້າຮ່ວມເຂົ້າໃຈແຈ້ງເຖິງຂັ້ນຕອນການກະກຽມໂຄງການ ແລະ ການຕິດຕາມເວລາຈັດຕັ້ງປະຕິບັດ.<br><br>ພະນັກງານຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ ທີ່ ຈັດຕັ້ງປະຕິບັດໂຄງການ LENS2 ກໍ່ໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານແຜນການ, ແລະ ຕິດຕາມກວດກາ ໂດຍອີງໃສ່ຂໍ້ມູນຕົວຈິງໃນການຈັດຕັ້ງປະຕິບັດໂຄງການຍ່ອຍມາເປັນບ່ອນອີງໃນການຝຶກ ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນໄດ້ວ່າຈຳນວນພະນັກງານວິຊາການທີ່.ເຂົ້າຮ່ວມແມ່ນບໍ່ໄດ້ຕາມເປົ້າໝາຍ:<br>ເປົ້າໝາຍທີ່ຕັ້ງໄວ້ປະຈຳປີ: 125<br>ຜົນທີ່ໄດ້ຮັບຕົວຈິງ: 121 | |
| **ອົງປະກອບທີ 2:**<br>**2.1** ເຮັດວຽກຮ່ວມກັນໃຫ້ປະສິດທິພາບຮ່ວມກັນກັບ **LENS2** ແລະ ກະຊວງກະສິກຳ ແລະ ປ່າໄມ້ **,** ຂັ້ນແຂວງ ແລະ ເມືອງທີ່ຕິດພັນກັບໂຄງການຍ່ອຍທີ່ນອນໃນ **LENS2** | ຜ່ານການຈັດຕັ້ງປະຕິບັດຕົວຈິງການຈັດຕັ້ງປະຕິບັດວຽກງານຕິດຕາມ ຂອງ ກຜງ ແມ່ນໄດ້ຮັບການຮ່ວມມືຈາກບັນດາໂຄງການຍ່ອຍ 14 ໂຄງການ ທີ່ຈັດຕັ້ງຢູ່ສູນກາງ, ແຂວງ ແລະ ກອງຄຸ້ມຄອງອຸທິຍານແຫ່ງຊາດ ທັງສອງແຫ່ງເປັນຢ່າງດີ ສະແດງອອກ ໃນການເຂົ້າຮ່ວມການຝຶກອົບຮົມຕ່າງໆ, ການປະຊຸມ, ສະຫຼຸບລາຍງານ ແລະ ການສະໜອງຂໍ້ມູນທີ່ຈຳເປັນ ໃຫ້ທາງ ກະຊວງ. ຜົນສຳເບັດວຽກງານດັ່ງກ່າວສະແກງອອກໃນການຈັດຕັ້ງກຸ້ມວິຊາການໃນການແລກປ່ຽນຂໍ້ມູນຂ່າວສານ, ການປະຊຸມຮ່ວມກັນລະຫວ່າງ 14 ໂຄງການຍ່ອຍ ປະຈຳໃຕມາດ ແລະ ການປະຊຸມສະຫຼຸບປະຈຳປີ ໂດຍແຕ່ລະຄັ້ງໄດ້ມີການສະຫຼຸບຖອດຖອນບົດຮຽນ ພ້ອມທັງຍົກປະເດັນປຶກສາຫື້ ແລະ ກຳນົດທິດທາງ ຮູບແບບການເຮັດວຽກຮ່ວມກັນເປັນແຕ່ລະໄລຍະ<br>ຈາກເປົ້າໝາຍທີ່ຕັ້ງໄວ້: 14 | ມີບາງໂຄງການຍ່ອຍ ຍັງມີຄວາມຊັກຊ້າໃນການສົ່ງບົດລາຍງານ ເຮັດໃຫ້ການສັງລວມລາຍງານໃຫ້ການນຳ |

| | | |
|---|---|---|
| | ຜົນທີ່ໄດ້ຮັບຕົວຈິງ: 14 | ກະຊວງ ກປ ມີຄວາມຊັກຊ້າ. |
| 2.2 ໂຄງການຍ່ອຍທີ່ຢູ່ພາຍໃຕ້ແຜນງານຂອງກະຊວງກະສິກຳ ແລະ ປ່າໄມ້ ຕ້ອງສົ່ງບົດລາຍງານປະຈຳ**ເດືອນ,** ໄຕມາດ ແລະ ປະຈຳປີ ໃຫ້ກົມແຜນການ ແລະ ການເງິນ | ການສົ່ງບົດລາຍງານແມ່ນໄດ້ຮັບການສະໜອງຕາມຄວາມຮຽກຮ້ອງຕ້ອງການ. ຂໍ້ມູນທີ່ບັນດາໂຄງການຍ່ອຍ ສົ່ງໃຫ້ກະຊວງ ກປ ແມ່ນອັນດຽວກັບທີ່ສົ່ງໃຫ້ໃຫ້ການກອງທຶນ ກໍ່ຄືຜູ້ໃຫ້ທຶນ. ການສົ່ງຂໍ້ມູນ ແມ່ນ ໄດ້ເຮັດເປັນປົກກະຕິ ໂດຍສະເພາະເປັນໄຕມາດ ແລະ ເປັນປີ. ປະຈຸບັນ ກພຽ ໄດ້ຮັບບົດລາຍງານຕ່າງໆ ຈາກບັນດາໂຄງການຍ່ອຍ ທັງສູນກາງ ແລະ ແຂວງ ຢ່າງເປັນປົກກະຕິ ແລະ ສາມາດສ້າງເປັນບົດລາຍງານການຈັດຕັ້ງປະຕິບັດ 14 ໂຄງການຍ່ອຍໃນຂະແໜງ ກປ ໃຫ້ການນຳກະຊວງ ກປ ໄດ້ ເປັນແຕ່ລະໄລຍະ<br>ການສົ່ງບົດລາຍງານແມ່ນໄດ້ຮັບການສະໜອງຕາມຄວາມຮຽກຮ້ອງຕ້ອງການ. ຂໍ້ມູນທີ່ບັນດາໂຄງການຍ່ອຍ ສົ່ງໃຫ້ກະຊວງ ກປ ແມ່ນອັນດຽວກັບທີ່ສົ່ງໃຫ້ໃຫ້ການກອງທຶນ ກໍ່ຄືຜູ້ໃຫ້ທຶນ. ການສົ່ງຂໍ້ມູນ ແມ່ນ ໄດ້ເຮັດເປັນປົກກະຕິ ໂດຍສະເພາະເປັນໄຕມາດ ແລະ ເປັນປີ.<br>ພະນັກງານທີ່ຮັບຜິດຊອບຈັດຕັ້ງປະຕິບັດໂຄງການ ລວມເຖິງຜູ້ຊີ້ນຳ ມີຄວາມເຂົ້າໃຈໃນລະບົບ ທີ່ ທາງຫ້ອງການກອງທຶນກຳນົດໄວ້ ຊຶ່ງສະແດງອອກໃນການຈັດຕັ້ງປະຕິບັດໂຄງການເຫັນວ່າຫລາຍໜ້າວຽກໄດ້ຮັບການຈັດຕັ້ງປະຕິບັດໄປຕາມແຜນ ໃນໄຕມາດທີ 2 ຂອງແຜນປີ 2020. ອີງໃສ່ປະສົບການ ແລະ ຄວາມຊຳນານໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາຄາດວ່າຈະບັນລຸຕາມຄາດໝາຍໃນໄລຍະທ້າຍໂຄງການ.<br>ຈາກເປົ້າໝາຍທີ່ຕັ້ງໄວ້ປະຈຳປີ: 100%<br>ຜົນທີ່ໄດ້ຮັບຕົວຈິງ: 100% | |

2.4 ສະຖານະ ກົນໄກຂອງການຈັດຕັ້ງ

ຂໍໃຫ້ນຳສະເໜີຂໍ້ມູນ ສະພາບກົນໄກດ້ານການຈັດຕັ້ງ ທີ່ສ້າງຂື້ນມາເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍການສົມທົບ ແລະປະສານງານກັບຄູ່ຮ່ວມງານ ແລະພາກສ່ວນກ່ຽວຂ້ອງ. ໃນນີ້ອາດລວມ ມີການປັບປຸງຂີດຄວາມສາມາດ ຫລືສິ່ງທ້າທາຍພາຍໃນ ອີງການຈັດຕັ້ງປະຕິບັດໂຄງການຍ່ອຍ.

ການຈັດຕັ້ງປະຕິບັດໂຄງການຄວນມີຄະນະຊີ້ນຳລວມ ພ້ອມດຽວກັນນັ້ນກໍ່ໃຫ້ມີການແຕ່ງຕັ້ງທີມງານຮັບຜິດຊອບ ໃນແຕ່ລະໂຄງການ. ປະຕິບັດລະບອບການລາຍງານ ແລະ ການສະໜອງຂໍ້ມູນໃຫ້ທັນກັບເວລາ. ການຈັດຕັ້ງປະຕິບັດໂຄງການກ່ຽວຂ້ອງກັບຂະແໜງການໃດກໍ່ຕ້ອງໃຫ້ຂະແໜງການນັ້ນ ຮັບຜິດຊອບໂດຍກົງ (ກົນໄກປະຕູດຽວ) ທັງນີ້ກໍ່ເພື່ອໃຫ້ເກີດການລວມສູນໃນການຊີ້ນຳ ລວມໄປເຖິງການຊຸກຍູ້ຕິດຕາມຢ່າງເປັນລະບົບ.

ໂຄງການທີ່ໄດ້ຮັບທຶນແຫຼ່ງດຽວກັນຕ້ອງໄດ້ກຳນົດຮູບແບບການຈັດຕັ້ງ ແລະ ການຄຸ້ມຄອງໄປໃນລວງດຽວກັນ. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ດຳເນີນຕາມແຜນ. ການກຳນົດບຸກຄະລາກອນ ຫຼື ທີມງານ ມາຮັບຜິດຊອບກໍ່ເປັນສ່ວນ

ສຳຄັນ ໂດຍສະເພາະຜູ້ທີ່ມີປະສົບການໃນການຈັດຕັ້ງປະຕິບັດໂຄງການ, ພະນັກງານທີ່ມາຊ່ວຍແຕ່ລະດ້ານຕ້ອງໄດ້ຜ່ານການຝຶກອົບ ຮົມໃນຫົວຂໍ້ວິຊາສະເພາະ ເຊັ່ນ: ການວາງແຜນ, ການຕິດຕາມ ແລະ ປະເມີນຜົນ ແລະ ການຄຸ້ມຄອງການເງິນ.

ການປະສານງານ ກັບບັນດາພາກສ່ວນທີ່ກ່ຽວຂ້ອງກໍ່ເປັນສິ່ງສຳຄັນເຊັ່ນ: ຂັ້ນກະຊວງມີພາກສ່ວນໃດແດ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການ, ຂັ້ນແຂວງກໍ່ເຊັ່ນດຽວກັນ. ການປະສານງານສະແດງອອກໄດ້ໃນຫຼາຍຮູບແບບເຊັ່ນ: ການສົ່ງບົດລາຍງານ, ການເຂົ້າຮ່ວມປະຊຸມ ແລະ ການແລກປ່ຽນບົດຮຽນ ເປັນແຕ່ລະໄລຍະ. ຂັ້ນກະຊວງ ກົມແຜນການ ແລະ ການເງິນເປັນໃຈກາງປະສານເຮັດບົດສະຫຼຸບລາຍງານ ລວມໄປເຖິງການສັງລວມເອົາແຜນຈາກພາກສ່ວນຕ່າງໆ ມາເປັນແຜນໃຫຍ່ຂອງຂະແໜງການ ນອກນັ້ນ ຍັງມີການຕິດຕາມກວດກາເປັນແຕ່ລະໄລຍະ. ສະເພາະວຽກງານການຄຸ້ມຄອງໂຄງການ ກົມແຜນການ ແລະ ການເງິນ ໄດ້ມີພະແນກຄຸ້ມຄອງໂຄງການເພື່ອມາຊ່ວຍໃນການໃນວຽກຕ່າງໆເຊັ່ນ:

1. ສົມທົບກັບພາກສ່ວນກ່ຽວຂ້ອງສ້າງກົນໄກຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາຂອງຂະແໜງການ ກະສິກຳ ແລະ ປ່າໄມ້., ຄົ້ນຄວ້າ ແລະ ສະເໜີຂັ້ນເທິງ ເພື່ອພິຈາລະນາສັ່ງໂຈະກິດຈະກຳ, ໂຄງການຍ່ອຍ ຂອງໂຄງການໃດໜຶ່ງທີ່ບໍ່ໄດ້ດຳເນີນຕາມແຜນ ຫຼື ນຳໃຊ້ທຶນບໍ່ໄປຕາມແຜນທີ່ອະນຸມັດ;
2. ຄົ້ນຄວ້າ ກວດຜ່ານເອກະສານ ກ່ຽວກັບວຽກງານການເງິນ, ການຈັດຊື້-ຈັດຈ້າງ ຂອງບັນດາໂຄງການຕ່າງໆ ເພື່ອໃຫ້ມີປະສິດທິຜົນສູງ, ທັນຕາມກຳນົດເວລາ ແລະ ຖືກຕ້ອງ ຕາມລະບຽບກົດໝາຍລັດ ແລະ ລະບຽບການຄຸ້ມຄອງນຳໃຊ້ງົບປະມານຂອງຜູ້ໃຫ້ທຶນ;
3. ສ້າງລະບົບຖານຂໍ້ມູນທີ່ທັນສະໃໝ່ ກ່ຽວກັບການຈັດຕັ້ງປະຕິບັດໂຄງການຕ່າງໆ ໂດຍສະເພາະ ໂຄງການ ODA ໃນຂະແໜງການ ກະສິກຳ ແລະ ປ່າໄມ້.
4. ສຶກສາ, ວິເຄາະ, ວິໄຈຂໍ້ມູນ ກ່ຽວກັບຜົນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອ ທາງການ ເພື່ອການພັດທະນາ ແລະ ນຳສະເໜີໃຫ້ຂັ້ນເທິງພິຈາລະນາ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດ;
5. ຍົກລະດັບຄວາມຮູ້ຄວາມຊຳນານງານດ້ານການຄຸ້ມຄອງໂຄງການ ໃຫ້ແກ່ພະນັກງານຜູ້ຮັບຜິດຊອບທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ດ້ວຍຫຼາຍຮູບແບບ;
6. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຄງການ ໄລຍະ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ.

ທັງໝົດເລົ່ານີ້ ເພື່ອຮັບປະກັນໃຫ້ບັນດາໜ້າວຽກທີ່ກ່າວມານັ້ນ ມີການປະສານຢ່າງເປັນລະບົບ ຈຳເປັນທີ່ສຸດ ທີ່ແຕ່ລະພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ຈັດວາງພະນັກງານຮັບຜິດຊອບໂດຍກົງ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ. ນອກນັ້ນ ການສ້າງເຄືອຄ່າຍຂອງທີມງານແຕ່ລະຂັ້ນ ກໍ່ຕ້ອງໄດ້ພິຈາລະນາ.

2.5 ການຈັດຕັ້ງປະຕິບັດກິດຈະກຳ ຕາມອົງປະກອບຂອງໂຄງການຍ່ອຍ ແລະ ຜົນສຳເລັດຂອງຜົນໄດ້ຮັບ.
ໃນຂໍ້ນີ້ ຂໍໃຫ້ອະທິບາຍ ຜົນໄດ້ຮັບຕົວຈິງ ຂອງແຕ່ລະກິດຈະກຳ, ຜົນສຳເລັດ ແລະ ສະໜອງ ລາຍລະອຽດຂອງຜົນໄດ້ຮັບໃນເອກະສານຊ້ອນທ້າຍ.

- **ກິດຈະກຳ1.1:** ສ້າງຮູບແບບການລາຍງານສຳລັບກົມແຜນການ ແລະ ການເງິນ ລວມທັງລະບົບການລາຍງານພາຍໃນທີ່ເປັນມາດຕະຖານທີ່ສາມາດລາຍງານ.

ກົມແຜນການ ແລະ ການເງິນ ໄດ້ສົມທົບກັບບັນດາພາກສ່ວນກ່ຽວຂ້ອງໃນການລະດົມແນວຄວາມຄິດໃນການສ້າງຮັບແບບການລາຍງານ ໂດຍໄດ້ມີການຈັດກອງປະຊຸມປຶກສາຫາລື ກ່ຽວກັບຫົວຂໍ້ດັ່ງກ່າວ ໂດຍ ກພຍ ໄດ້ຮ່າງແບບຟອມການລາຍງານ ແລະ ໄດ້ນຳໄປສະເໜີໃຫ້ພາກສ່ວນກ່ຽວຂ້ອງມີຄຳເຫັນ. ຜ່ານການຈັດຕັ້ງປະຕິບັດຕົວຈິງຮູບແບບການລາຍງານຍັງໃຊ້ລະບົບເກົ່າ ທີ່ໄດ້ຮັບການຮັບຮອງຈາກ ລມຕ . ສ່ວນທີ່ແຕກຕ່າງແມ່ນຂໍ້ອຂໍ້ ແລະ ເນື້ອໃນ. ສະເພາະການລາຍງານບັນດາ 14 ໂຄງການຍ່ອຍ, ພະແນກຄຸ້ມຄອງໂຄງການໄດ້ມີຄວາມເປັນເອກະພາບກັບຮ່າງບົດລາຍງານທີ່ບັນດາໂຄງການໃຊ້ລາຍງານຜູ້ໃຫ້ທຶນ ທັງນີ້ກໍ່ເພື່ອບໍ່ເປັນການເພີ້ມວຽກໃຫ້ບັນດາໂຄງການໃນການເຮັດບົດລາຍງານ ແຕ່ເຖິງຢ່າງໃດກໍ່ຕາມ ເນື້ອໃນທີ່ບັນດາໂຄງການຍ່ອຍໃດ້ລາຍງານຜູ້ໃຫ້ທຶນກໍ່ສາມາດເປັນສ່ວນນຶ່ງໃນການລາຍງານກະຊວງ.

- **ກິດຈະກຳ 1.2:** ຮ່າງຂໍ້ແນະນຳວຽກງານແຜນການຈາກກະຊວງກະສິກຳ ແລະ ປ່າໄມ້ທີ່ປັບປຸງແລ້ວຈະຖືກເຜີຍແຜ່ໃຫ້ບັນດາໂຄງການຍ່ອຍ, ແຂວງ ແລະ ເມືອງ.

ພະແນກຄຸ້ມຄອງໂຄງການ ສົມທົບກັບພະແນກແຜນການ ໄດ້ສ້າງຄູ່ມືຕ່າງໆ ເພື່ອເປັນບ່ອນອີງໃຫ້ບັນດາພະນັກງານທີ່ກ່ຽວຂ້ອງ ໃນການຜັນຂະຫຍາຍ ເຊັ່ນ: ຄູ່ມືຄູ່ມືການວາງແຜນ ແລະ ການຕິດຕາມປະເມີນຜົນ 1 ສະບັບ ຊຶ່ງໄດ້ຮັບການຮັບຮອງຄັ້ງວັນທີ 30 ພະຈິກ 2020 ເພື່ອນຳໃຊ້ເປັນທາງການ. ຈຸດປະສົງຫຼັກໃນການສ້າງປື້ມຄູ່ມືນີ້ຂຶ້ນມາກໍ່ເພື່ອໃຫ້ເປັນເອກະສານແນະນຳບັນດາໜ່ວຍງານ, ວິຊາການວາງແຜນໃຫ້ຮູ້ເຖິງວິທີການ ແລະ ການດຳເນີນ ການວາງແຜນ ອອກແບບໂຄງການ ລວມໄປເຖິງການວິເຄາະວິໃຈ ແລະ ວິທີການຕິດຕາມ ແລະ ປະເມີນຜົນໃດ້ຮັບ ທີ່ໄດ້ຈາກການຈັດຕັ້ງປະຕິບັດໂຄງການ/ແຜນບົດແນະນຳຂອງ ລມຕ 1 ສະບັບ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ລະບົບ ProMIS2 ສະບັບເລກທີ0323/ກປ, ລົງວັນທີ 25 ກຸມພາ 2021 ແລະ ຄູ່ມືນຳໃຊ້ລະບົບ ProMIS2.

ຈຸດປະສົງ: ເພື່ອກຳນົດເຄື່ອງມື, ລະບອບແບບແຜນຕິດຕາມ, ກົນໄກການຄຸ້ມຄອງຂໍ້ມູນການຈັດຕັ້ງປະຕິບັດໂຄງການໃຫ້ກະທັດຫັດ ວ່ອງໄວ ທັນສະໄໝ ສຳລັບໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອເພື່ອການພັດທະນາ ໃນຂະແໜງ ກະສິກຳ ແລະ ປ່າໄມ້. ເພື່ອເປັນບ່ອນອີງໃຫ້ບັນດາພາກສ່ວນຄຸ້ມຄອງໂຄງການໃນການປະຕິບັດວຽກງານຢ່າງຄ່ອງຕົວໃນການຊຸກຍູ້ ຕິດຕາມ, ຄຸ້ມຄອງການນຳໃຊ້ທຶນ ຮັບປະກັນການນຳໃຊ້ທຶນໃຫ້ຖືກ ຕ້ອງຕາມລະບຽບການ ແລະ ມີປະສິດທິຜົນ ພ້ອມດຽວກັນ ເພື່ອຮັບປະກັນການລາຍງານສະພາບການ ຈັດຕັ້ງປະຕິບັດບັນດາໂຄງການ, ແຜນງານ ໃຫ້ແກ່ລະດັບການນຳ ກະຊວງກະສິກຳ ແລະ ປ່າໄມ້.

ເອກະສານທັງສາມສະບັບນີ້ ແມ່ນໄດ້ຜ່ານການລະດົມແນວຄວາມຄິດຈາກບັນດາພາກສ່ວນທີ່ກ່ຽວຂ້ອງ ລວມໄປເຖິງບັນດາໂຄງການ ຊຶ່ງຈັດໃນຮູບແບບການສຳມະນາຕ່າງໆ ທີ່ກົມແຜນການ ແລະ ການເງິນຈັດຂຶ້ນ.

- **ກິດຈະກຳ 1.3:** ການຝຶກອົບຮົມ ເພື່ອຈະກາຍເປັນຄູຝຶກ ແລະ ສາມາດຝຶກຕໍ່ໃຫ້ພະນັກງານ ຂັ້ນແຂວງ ແລະ ເມືອງໃນການຂຶ້ນວຽກງານແຜນການ ແລະ ຕິດຕາມ.

ກົມແຜນການ ແລະ ການເງິນ ໄດ້ສຳທົບກັບພະແນກ ການທີ່ກ່ຽວຂ້ອງໃນການຄັດເລືອກພະນັກງານເຂົ້າຝຶກອົບຮົມເພື່ອຈະກາຍເປັນຄູຝຶກ ແລະ ສາມາດຝຶກຕໍ່ໃຫ້ພະນັກງານ ຂັ້ນແຂວງ ແລະ ເມືອງ ໃນການຂຶ້ນວຽກງານແຜນການ ແລະ ຕິດຕາມ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ມີພະນັກງານຈຳນວນ 74 ຄົນ(ຍິງ 27 ຄົນ) ທີ່ສາມາດສືບຕໍ່ຖ່າຍທອດບົດຮຽນໄປສູ່ວົງກວ້າງ ໂດຍສະເພາະວຽກງານວາງແຜນ, ວຽກງານຕິດຕາມໂຄງການ ແລະ ການຄຸ້ມຄອງການເງິນໂຄງການ. ຄູຝຶກເລົ່ານີ້ ໄດ້ເປັນທີມງານສ້າງຄວາມເຂັ້ມແຂງຂອງກົມ ຜງ ລົງຈັດຕັ້ງຝຶກອົບຮົມໃຫ້ພະນັກງານຂັ້ນແຂວງ ແລະ ເມືອງ ໂດຍສະເພາະ ໃນເຂດທີ່ມີການຈັດຕັ້ງປະຕິບັດ 14 ໂຄງການຍ່ອຍ.

- **ກິດຈະກຳ 1.4:** ການຝຶກອົບຮົມ ກ່ຽວກັບ ວຽກງານແຜນການ, ແລະ ຕິດຕາມກວດກາ ໃຫ້ພະນັກງານເມືອງ

ກົມແຜນການ ແລະ ການເງິນ ໄດ້ສໍາທັບກັບພະແນກກະສິກໍາ ແລະ ປ່າໄມ້ ແຂວງ ແລະ ຫ້ອງການ ກະສິກໍາ ແລະ ປ່າໄມ້ ເມືອງ ລວມໄປເຖິງພະນັກງານວິຊາການທີ່ຈັດຕັ້ງປະຕິບັດ 14 ໂຄງການຍ່ອຍ ແລະ ຂະແໜງ ກປ ທົ່ວປະເທດໃນການຄັດເລືອກພະນັກງານເຂົ້າຝຶກອົບຮົມ ຜ່ານການຈັດຕັ້ງປະຕິບັດຕົວຈິງມີພະນັກງານເຂົ້າຮ່ວມທັງໝົດ 121 ຄົນ ຍິງ 27 ຜົນການປະເມີນຈາກການຝຶກເຫັນໄດ້ວ່າພະນັກງານມີຄວາມເຂົ້າໃຈໃນເນື້ອໃນ ແລະ ຫົວຂໍ້ດັ່ງກ່າວ ແລະ ໃຫ້ຄໍາໝັ້ນສາຍາວ່າຈະນໍາເອົາບົດຮຽນທີ່ໄດ້ຈາກການຝຶກໄປນໍາໃຊ້ເຂົ້າໃນວຽກງານຕົວຈິງ. ເຖິງຢ່າງໃດກໍ່ຕາມ ກໍ່ຍັງມີຄວາມຈໍາເປັນທີ່ຢາກໃຫ້ທາງສູນກາງ ລົງສົມທົບກັບທ້ອງຖິ່ນໃນການຈັດຝຶກອົບຮົມ ເປັນແຕ່ລະໄລຍະ ເພື່ອຮັບປະກັນຄວາມຕໍ່ເນື່ອງ.

- **ກິດຈະກໍາ 2.1:** ເພີ່ມປະສິດທິພາບໃນການຄຸ້ມຄອງບໍລິຫານການກຸ່ມຈັດຕັ້ງປະຕິບັດໂຄງການກັບ **LENS2** ພາຍໃນກະຊວງ ກະສິກໍາ ແລະ ປ່າໄມ້.

ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ ກຜງ ໄດ້ສ້າງກົນໄກການປະສານງານ ໂດຍໄດ້ຈັດຕັ້ງກຸ່ມວິຊາການໃນການແລກປ່ຽນຂໍ້ມູນຂ່າວສານ ເພີ່ມທັງສົ່ງບົດສະຫຼຸບຕ່າງໆ ລວມໄປເຖິງບົດລາຍງານ. ມີການຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນເປັນແຕ່ລະໄລຍະ. ພ້ອມກຽວກັນນັ້ນກໍ່ມີການລົງຊຸກຍູ້ຕິດຕາມບັນດາໂຄງການຍ່ອຍເປັນປະຈໍາ ແລະໃນເວລາຜູ້ໃຫ້ທຶນມາຕິດຕາມ ຜ່ານການຈັດຕັ້ງຕົວຈິງສາມາດຈັດກອງປະຊຸມສະຫຼຸບລາຍງານປະຈໍາໄຕມາດໄດ້ 4 ຄັ້ງ, ກອງປະຊຸມປຶກສາຫາລື ແລະ ສໍາມະນາ ໄດ້: 12 ຄັ້ງ ແລະ ລົງຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍໄດ້ 08ຄັ້ງ ໃນຈໍານວນ 14 ໂຄງການ. ຜ່ານການຈັດຕັ້ງປະຕິບັດວຽກດັ່ງກ່າວສາມາດກໍາໄດ້ຂໍ້ມູນການຈັດຕັ້ງປະຕິບັດໂຄງການ ແລະສາມາດສະຫຼຸບຕີລາຍລາ ເປັນແຕ່ລະໄລຍະ.

- **ກິດຈະກໍາ 2.2:** ໂຄງການຍ່ອຍທີ່ຢູ່ພາຍໃຕ້ແຜນງານຂອງກະຊວງກະສິກໍາ ແລະ ປ່າໄມ້ ຕ້ອງສົ່ງບົດລາຍງານປະຈໍາເດືອນ , ໄຕມາດ ແລະ ປະຈໍາປີ ໃຫ້ກົມແຜນການ ແລະ ການເງິນ.

ການສົ່ງບົດລາຍງານຈາກບັນດາໂຄງການຍ່ອນໃຫ້ ກົມແຜນການ ແລະ ການເງິນ ໄດ້ຮັບການປັບປຸງທາງດ້ານເນື້ອໃນ ແລະ ທ່ວງທັນກັບເວລາ . ເອກະສານທີ່ໂຄງການຍ່ອຍສົ່ງໃຫ້ປະກອບມີ: ແຜນວຽກ ແລະ ແຜນງົບປະມານປະຈໍາປີ, ບົດລາຍງານປະຈໍາງວດ ແລະ ເອກະສານທີ່ຈໍາເປັນຕາມການຮ້ອງຂໍ້. ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນໄດ້ວ່າ 14 ໂຄງການຍ່ອນ ແມ່ນສາມາດສົ່ງບົດລາຍງານໃຫ້ ກຜງ ຢ່າງຄົບຖ້ວນ. ແຕ່ເຖິງຢ່າງໃດທໍ່ຕາມກໍ່ຍັງມີບາງໂຄງການ ຍັງມີຄວາມຊັກຊ້າໃນການສົ່ງບົດລາຍງນຢູ່. ຜ່ານຈາກການຈັດຕັ້ງປະຕິບັດກິດຈະກໍາດັ່ງກ່າວ ເຮັດໃຫ້ກົມແຜນການ ແລະ ການເງິນ ມີຂໍມູນທີ່ຈໍາເປັນ ອລະ ພຽງພໍໃນການລາຍງານກະຊວງ ພ້ອມດຽວກັນນັ້ນ ກໍ່ເຮັດໃຫ້ມີແນວຄວາມຄິດໃນການກໍານົດຮູບແບການລາຍງານຜ່ານລະບົບຕິດຕາມປະເມີນຜົນຂອງກະຊວງ ໃນອານາຄົດ.

2.6 ຂໍ້ຫຍຸ້ງຍາກ ແລະບັນຫາສໍາຄັນ ທີ່ພົບພໍ້ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃສ່ລາຍການ ບັນຫາຕ່າງໆ ທີ່ພົບພໍ້ ແລະວິທີການ/ມາດຕະການແກ້ໄຂ ບັນຫາເຫລົ່ານັ້ນ.

| ບັນຫາທີ່ພົບພໍ້ | ວິທີການ/ມາດຕະການທີ່ໄດ້ນໍາໃຊ້ ໃນການແກ້ໄຂ |
|---|---|
| 1. ຄວາມເຂົ້າໃຈໃນກົນໄກການປະສານງານຍັງເຮັດບໍ່ທັນໄດ້ດີ ສະແດງອອກໃນການພົວພັນລະຫວ່າງບັນດາໂຄງການຍ່ອຍ ໂດຍສະເພາະ ການປະຕິບັດລະບອບການລາຍງານ | **ໄດ້ສ້າງຄວາມເຂົ້າໃຈໃຫ້ແກ່ພະນັກງານຜູ້ຮັບຜິດຊອບວຽກຕົວຈິງ ໂດຍການຈັດສໍາມະນາ ຫຼື ເຜີຍແຜ່ເອກະສານໂຄງການ ກ່ອນການຈັດຕັ້ງປະຕິບັດຕົວຈິງ** |
| 2. ການປະຕິບັດຕາມຂໍ້ກໍານົດທີ່ຫ້ອງການກອງທຶນວາງອອກຍັງບໍ່ທັນເປັນເອກະພາບ ໂດຍສະເພາະການສະຫຼຸບລາຍງານຍັງມີຄວາມຊັກຊ້າ ແລະ ບໍ່ຖືກຕາມ | **ມີຈັດກອງປະຊຸມທົບທວນຜົນຂອງການຈັດຕັ້ງປະຕິບັດໂຄງການ ເປັນແຕ່ລະໄລຍະ ເພື່ອ ຍົກໃຫ້ເຫັນຈຸດດີ ຈຸດອ່ອນ ແລະ ກໍານົດວິທີການແກ້ໄຂໃຫ້ທັນເວລາ** |

| | |
|---|---|
| ເປົ້າ. | |
| 3. ການສ້າງຄວາມຮັບຮູ້ເຂົ້າໃຈຕໍ່ພາລະບົບບາດຂອງ ພາກສ່ວນຕ່າງໆ ຍັງບໍ່ທັນ ຈະແຈ້ງ ຊຶ່ງສະແດງອອກ ໃນການປະຕິບັດຕົວຈິງ ເຊັ່ນ: ການຜ່ານເອກະສານ ກ່ອນຈະໄປຫາຜູ້ໃຫ້ທຶນຕ້ອງຜ່ານບ່ອນໃດແດ່ | **ໄດ້ຈັດສຳມະນາເຜີຍແຜ່ ພາລະບົບດບາດຂອງແຕ່ລະ ພາກສ່ວນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ** |

## III. ແຜນການ ແລະ ທິດທາງຕໍ່ໜ້າ

ຂໍ້ນີ້ ຂໍໃຫ້ອະທິບາຍ ແຜນການ ລວມທັງ ແຜນການຕິດຕາມ-ສືບຕໍ່ ຫລື ບົດສະເໜີ, ການຜັນຂະຫຍາຍໂຄງການຕໍ່ໜ້າ, ການຜັນຂະຫຍາຍຮູບແບບໄປບ່ອນອື່ນ, ເພື່ອຮັກສາໂຄງການໃຫ້ມີຄວາມຍືນຍົງໃນຕໍ່ໜ້າ. ຈະເຮັດແນວໃດເພື່ອໃຫ້ບັນລຸ ແລະໃຜຈະເປັນຄົນເຮັດ.

ການຕິດຕາມການຈັດຕັ້ງປະຕິບັດໂຄງການ ແມ່ນພາລະບົບບາດຂອງກົມແຜນການ ແລະ ການເງິນ, ພາຍຫຼັງ ໂຄງການສິ້ນສຸດ ການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວຈະເຫັນມາສູ່ວຽກປົກກະຕິ ໂດຍນຳໃຊ້ຊັບພະຍາກອນ ທີ່ພາກລັດ ປະກອບ ໃຫ້ ເຊັ່ນຈຳນວນພະນັກງານ ແລະ ງົບປະມານ. ນອກນັ້ນ ຍັງຈະໄດ້ສົມທົບກັບຄູ່ຮ່ວມພັດທະນາ ໃນການສືບຕໍ່ ຜັນຂະຫຍາຍ ໃນວຽກດັ່ງກ່າວ ຢ່າງເປັນປົກກະຕິ ໂດຍ ແຕ່ລະປີ ຈະມີການລົງຕິດຕາມການຈັດຕັ້ງປະຕິບັດໂຄງການຕ່າງໆ ໃນຮູບແບບ ການຮ່ວມກັບຜູ້ໃຫ້ທຶນລົງຕິດຕາມ ແລະ ການຕິດຕາມປົກກະຕິ ເປັນແຕ່ລະໄລຍະ. ການພັດທະນາເຄື່ອງມື ໃນການສັງລວມຂໍ້ມູນກໍ່ແມ່ນນຶ່ງໃນຫລາຍກິດຈະກຳທີ່ຕ້ອງໄດ້ສືບຕໍ່ ເຊັ່ນການພັດທະນາລະບົບ ProMIS2 ທີ່ ມີ ແລະ ໄດ້ເລີ້ມນຳໃຊ້ ໃຫ້ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງໃນການຈັດຕັ້ງປະຕິບັດໂຄງການ. ກົມແຜນການ ແລະ ການເງິນ ໃນນາມຜູ້ຮັບຜິດຊອບສັງລວມ ລາຍງານ ຈະເປັນໃຈກາງ ໂດຍສົມທົບກັບ ບັນດາກົມ, ພະແນກ ກປ ແຂວງ . ຫ້ອງການ ກປ ເມືອງ ລວມໄປເຖິງ ບັນດາໂຄງການ ຕ້ອງໄດ້ສືບຕໍ່ປະສານງານ ແລະ ຮ່ວມມື ໃນການຈັດຕັ້ງວຽກງານ ຕິດຕາມ ເປັນແຕ່ລະໄລຍະ.

## IV. ສະຫຼຸບສັງລວມ

ການຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງດ້ານການວາງແຜນ, ປະສານງານ, ຕິດຕາມ ແລະ ປະເມີນຜົນ ຂອງ ໂຄງການລົງທຶນ ໃນຂະແໜງກະສິກຳ ແລະ ປ່າໄມ້ ໂດຍສຸມໃສ່ໂຄງການທີ່ນອນໃນ (LENS2) ທີ່ ກົມແຜນການ ແລະ ການເງິນຮັບຜິດຊອບ ເຫັນໄດ້ວ່າໃນໄລຍະເບື້ອງຕົ້ນແມ່ນເກີດຄວາມຊັກຊ້າ(ຊ້າປີ1) ສາເຫດກໍ່ຍ້ອນຄວາມເຂົ້າໃຈ ຂອງທີມງານຮັບຜິດຊອບຍັງບໍ່ທັນແຈ້ງ, ການປະສານງານກັບຫ້ອງການກອງທຶນຍັງບໍ່ທັນເປັນປົກກະຕິ. ພາຍຫຼັງກົມ ແຜນການ ແລະ ການເງິນ ໄດ້ມີການປັບປຸງທີມງານຮັບຜິດຊອບ ເຫັນໄດ້ວ່າ ການຂັບເຄື່ອນບັນດາກິດຈະກຳ ແລະ ການນຳ ໃຊ້ງົບປະມານ ໄດ້ໄປຕາມແຜນ ທີ່ໄດ້ຮັບອະນຸມັດຈາກຜູ້ໃຫ້ທຶນ.

ໂຄງການດັ່ງກ່າວໄດ້ເປັນສ່ວນນຶ່ງໃນການສ້າງຄວາມອາດສາມາດຂອງພະນັກງານວິຊາການ ທີ່ເຮັດວຽກກ່ຽວກັບ ການວາງແຜນ ກໍ່ຄືການຕິດຕາມ ແລະ ປະເມີນຜົນ. ພະນັກງານຢູ່ຂັ້ນສູນກາງ, ພະແນກ ກປ ແຂວງ ແລະ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ໄດ້ຮັບການຝຶກອົບຮົມດ້ານວິຊາຊະເພາະ ເປັນແມ່ນ ການວາງແຜນແຜນ ແລະ ການຕິດຕາມ ການຈັດຕັ້ງປະຕິບັດໂຄງການ.

ເອກະສານຄູ່ມື ແລະ ຄຳແນະນຳ ຂອງ ລມຕ ໄດ້ຖືກພັດທະນາ ແລະ ສ້າງຂຶ້ນ ໃນໄລຍະໂຄງການດຳເນີນ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ.

ສະຫຼຸບລວມແລ້ວ ເຖິງແມ່ນວ່າການສະໜັບສະໜູນທາງດ້ານງົບປະມານຈາກ LENS2 ຈະເປັນຈຳນວນ ງົບປະມານບໍ່ຫລາຍ ແຕ່ມັນກໍສາມາດປະກອບສ່ວນຊ່ວຍໃຫ້ການຂັບເຄື່ອນວຽກງານການວາງແຜນ ແລະ ການຕິດຕາມ ການຈັດຕັ້ງປະຕິບັດໂຄງການຂອງຂະ ແໜງການໄດ້ຮັບການປັບປຸງ ແລະ ພັດທະນາ ຢ່າງເປັນລະບົບໂດຍສະເພາະ ທາງ ດ້ານຊັບພະຍາກອນມະນຸດ ນອກຈາກນັ້ນ ຍັງໄດ້ຊ່ວຍໃນການພັດທະນາຄູ່ມື ພ້ອມທັງກົນໄກການປະສານງານ ຂອງລະຫ່

ວາງອົງກອນໄດ້ດີພໍສົມຄວນ. ສະນັ້ນ, ຖ້າມີຮູບແບບການຊ່ວຍເຫຼືອໃນຮູບແບບລັກສະນະດັ່ງກ່າວ ທາງພາກລັດກໍ່ຄວາມໃຫ້ຄວາມເອົາໃຈໃສ່ສູງສົມຄວນ ໃນການຍາດແຍ່ງທຶນດັ່ງກ່າວ.

V. ຂໍ້ສະເໜີແນະ ອີງໃສ່ບົດຮຽນທີ່ຖອດຖອນໄດ້

ກ. ຄວນຈະເຮັດຫຍັງໃນຕໍ່ໜ້າ?

1) ສືບຕໍ່ກົນໄກການປະສານງານ ທີ່ໄດ້ສ້າງຂຶ້ນເພື່ອສືບຕໍ່ວຽກງານໃຫ້ດຳເນີນເປັນປົກກະຕິ.
2) ຫັນເອົາກິດຈະກຳຕ່າງໆ ຂອງໂຄງການທີ່ໄດ້ຖືກຈັດຕັ້ງໃນລະໄຍຜ່ານມາ ເຂົ້າໃນວຽກງານປົກກະຕິຂອງລັດ.
3) ກຳນົດໜ້າວຽກໃຫ້ຖືກຕາມວິຊາສະເພາະໃຫ້ພະນັກງານທີ່ໄດ້ຮັບການຝຶກອົບຮົມ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິພາບ.

ຂ. ຄວນຈະຫລີກເວັ້ນຫຍັງໃນຕໍ່ໜ້າ?

1) ປັບທັດສະນະ ແລະ ຄວາມຮັບຮູ້ ຂອງບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດໂຄງການໂດຍບໍ່ໃຫ້ແບ່ງແຍກວ່າອັນໃດແມ່ນໂຄງການ ອັນໃດແມ່ນຂອງລັດສ້າງຂຶ້ນ.
2) ການກຳນົດຕົວຊີ້ວັດທີ່ສູງເກີນໄປ ຈະເປັນອຸປະສັກໃນການບັນລຸເປົ້າໝາຍ
3) ການອອກແບບໂຄງການ(ກິດຈະກຳ) ຄວນໄປຕາມສະພາບຂໍ້ມູນທີ່ມີ ແລະ ອີງໃສ່ຄວາມເປັນຈິງ ບໍ່ຄວນຄາດຄະເນ

ຄ. ຂໍ້ແນະນຳລວມອື່ນໆ

1) ສ້າງຄວາມເຂົ້າໃຈຢ່າງເປັນເອກະພາບ ໃຫ້ແກ່ບັນດາອົງກອນ, ພາກສ່ວນທີ່ກ່ຽວຂ້ອງ ລວມໄປເຖິງ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກການຈັດຕັ້ງປະຕິບັດໂຄງການ.
2) ຖ້າມີການສືບຕໍ່ສະໜັບສະໜູນທາງດ້ານທຶນຮອນໃນການຈັດຕັ້ງປະຕິບັດໂຄງການຄວນຮັກສາໄວ້ທີມງານທີ່ມີປະສົບການ ຈະຊ່ວຍໄດ້ຫລາຍ ໃນການຂັບເຄື່ອນ ການຈັດຕັ້ງປະຕິບັດດຳເນີນໄປໄດ້ດີ ແລະ ຕໍ່ເນື່ອງ.

| | |
|---|---|
| ກະກຽມໂດຍ: | ຢັ້ງຢືນໂດຍ: |
| ລາຍເຊັນ: | ລາຍເຊັນ: |
| ຊື່: ສົມພະໄທ ລຽງສອນ | ຊື່: ນ. ສຸດາລາ ພົມມະສອນ |
| ວັນທີ: 24 JAN 2022 | ວັນທີ: 24 JAN 2022 |

ສຳລັບ ກປສ **ເທົ່ານັ້ນ:**

1. ຜົນສຳເລັດ ຕາມຈຸດປະສົງ, ຜົນໄດ້ຮັບຍ່ອຍ ແລະ ຜົນໄດ້ຮັບ ຂອງໂຄງການຍ່ອຍ

2. ຜົນສຳເລັດ ຕາມກອບດ້ານເວລາ

3. ຜົນງານດ້ານການເງິນ ແລະ ຈັດຊື້-ຈັດຈ້າງ

4. ຜົນງານດ້ານ ກົນໄກການຈັດຕັ້ງ ແລະດ້ານບຸກຄະລາກອນ ລວມທັງການປະເມີນຄວາມສາມາດ

5. ບົດຮຽນທີ່ຖອດຖອນໄດ້ ແລະຄຳແນະນຳໃນຕໍ່ໜ້າ (ຈະເຮັດຫຍັງ, ບໍ່ເຮັດຫຍັງ, ຈະເລີ່ມເຮັດຫຍັງ?)

ສືບຕໍ່ເຮັດຫຍັງ:

ສິ່ງທີ່ບໍ່ຄວນເຮັດອີກ:

ມີອັນໃດໃໝ່/ຈະເລີ່ມເຮັດໃນຕໍ່ໜ້າ:

6. ການຈັດອັນເການອັນດັບຜົນສຳເລັດຂອງໂຄງການ

ພໍໃຈຫຼາຍ ☐
ພໍໃຈ ☐
ພໍໃຈປານກາງ ☐
ບໍ່ພໍໃຈປານກາງ ☐
ບໍ່ພໍໃຈ ☐

7. ຜົນສໍາເລັດດ້ານຜົນໄດ້ຮັບຍ່ອຍໂຄງການ

ຈໍານວນຜົນໄດ້ຮັບຍ່ອຍ ທີ່ຕັ້ງໄວ້__________________

ຈໍານວນໝາຫຜົນ ທີ່ບັນລຸໄດ້________________

ເປີເຊັນ ການຈັດເກນຜົນງານ________________

ກະກຽມໂດຍ:

ຊື່ແລະລາຍເຊັນ:____________________________________ ວັນທີ:
____________________________________

ຕໍາແໜ່ງ: ____________________________________________

ກວດໂດຍ:

ຊື່ແລະລາຍເຊັນ:____________________________________ ວັນທີ:
____________________________________

ຕໍາແໜ່ງ: ____________________________________________

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| **Project Development Objective (LENS2)** | | **To strengthen the country systems for managing protected areas, for enforcing wildlife laws and for implementing environment and social regulations** | | | | | | | | | | | |
| **Sub-Project Objective** | | **To enhance DOPF capacity on coordination, monitoring, and evaluation of investment projects focusing first on those with LENS2 support** | | | | | | | | | | | |
| **Indicators** | **Core** | **Unit of Measure** | **Plan** | **Baseline 2017** | **Annual Target Values**<br>**YEAR 1 2018 (2 months)** | **YEAR 2 2019** | **YEAR 3 2020** | **YEAR 4 2021** | **Reporting Frequency** | **Data Source/ Methodology** | **Resp. for Data Collection** | **Responsible for Data Analysis and Reporting** | **Description (Indicator Definition)** |
| **Sub-Project Indicators contributing to LENS2** | | | | | | | | | | | | | |
| **Project Development Objective Indicator** | | | | | | | | | | | | | |
| **SP Outcome Indicator 1.** Percentage increase of the score of functional capacity of DOPF (annual) | | Per cent % | Plan | 12 | 22 | 40 | 56 | 50 | Semester/Annual | Percentage derived from assessment of criteria met in FCI | DOPF in consultation with EPF M&E | DOPF, MAF | Department of Planning and Finance obtains the planning mechenism to look for the budget sources to support in forest management |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 20 | 40% | 56% | | | | | |
| **Intermediate Results Indicators** | | | | | | | | | | | | | |
| **SP Outcome Indicator 2.** Staff of SDA and SDA partner institutions that received formal short training course or participate in study tours (cumulative) (annual) | # staff | Number # | Plan | 0 | 30 | 70 | 100 | 331 | Semester/Annual | Training plan and reports and participants record | DOPF in consultation with EPF M&E | DOPF, MAF | The indicator measures the number of individual staff of Subproject Delivery Agencies (SDA) and SDA partner institutions that receive eligible training and so, indirectly the strengthening of SDA and partners institutions capacities. "Formal short courses" refers to training with longer than 16 hours and less than 80 hours qualify. A person receiving several courses can be counted more than once. |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 60 | 195 | 449 | | | | | |
| | Female beneficiary | | Plan | | 20 | 20 | 20 | 20 | | | | | The sub-indicator measures the level of female participation in training and track potential gender issues. The female beneficiary refers to the number of female participants in the total number of staff of SDA and SDA partner's institutions that receive formal short courses or participate in study tours. |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 10 | 54 | 121 | | | | | |
| **Sub-Project Indicators Based on Components** | | | | | | | | | | | | | |
| **Component 1: Strendthened capacity for program/project planning** | | | | | | | | | | | | | |
| **SP Result Indicator 1.1.** Establish MER for DOPF that can be applied, including a standard internal reporting system (annual) | | Per cent % | Plan | 0 | 50 | 80 | 100 | 100 | Semester/Annual | Test the uderstanding of 14 Sub Projects | DOPF, MAF Collection data and create the report | DOPF, MAF | Test understanding about planning before and after traning |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 30 | 90 | 100% | | | | | |
| **SP Result Indicator 1.2.** Draft MAF Planning guideline developed and introduced to Sub-projects, PAFO and DAFO (annual) | | Number # | Plan | 0 | 3 | 3 | 3 | 1 | Semester/Annual | Developed Planning Guideline | DOPF, MAF Developed and Introduce to Sub Projects, PAFO and DAFO | DOPF, MAF | DOPF develop and introduce Planning Guideline and Guideline M&E program |
| | | | Revised Plan | | | 0 | 2 | | | | | | |
| | | | Actual | | | 0 | 2 | 3 | | | | | |
| **SP Result Indicator 1.3.** 35 PAFO staff at province level will be trained to become trainers and are able to deliver training to peers at DAFO on Planning and Monitoring. (cummulative) | | Number # | Plan | n/a | 10 | 20 | 35 | 74 | Semester/Annual | Training of Trainners for PAFO staffs | DOPF, MAF organize the Trainning | DOPF, MAF | PAFO staff are trained as master trainers and will be then able to train DAFO staff on planning. |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 0 | 74 | 74 | | | | | |
| **SP Result Indicator 1.4.** Trained DAFO on Planning and Monitoring (125 staffs, including Sub project 70 staffs) (annual) | | Number # | Plan | n/a | 40 | 80 | 125 | 125 | Semester/Annual | Training of Trainer for DAFO staffs | DOPF, MAF organize the Trainning | DOPF, MAF | DAFO staffs trained for the plaing including Subproject staff |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 20 | 121 | 121 | | | | | |
| **Component 2: Improved capacity for program/project management and coordination** | | | | | | | | | | | | | |
| **SP Result Indicator 2.1.** Effective operation of the LENS2 working group of MAF (annual) | | Number # | Plan | 0 | 14 | 14 | 14 | 14 | Semester/Annual | Organize working group or communication by phone or email | DOPF, MAF Collection data and create the report and submite to EPF | DOPF, MAF | There is a technical working group for each sub Project and conducting meeting 2 times a year. This activity will be conducted in second year |
| | | | Revised Plan | | | 0 | 0 | | | | | | |
| | | | Actual | | | 0 | 14 | 14 | | | | | |
| **SP Result Indicator 2.2.** Subprojects under MAF have the report to DOPF for quarterly and yearly (annual) | | Per cent % | Plan | 0 | 0 | 80 | 100 | 100 | Semester/Annual | DOPF gathers data, review and verify prior to submission to EPF | DOPF project coorfinator in consultation with EPF M&E | DOPF, MAF | The progress report of subproject will be submitted to DOPF |
| | | | Revised Plan | | | 0 | 40 | | | | | | |
| | | | Actual | | | 40 | 80 | 100 | | | | | |
| **Component 3: Improved capacity for M&E and Reporting** | | | | | | | | | | | | | |
| **SP Result Indicator 3.1.** Capacity to deliver output as defined in the AWPB (annual) | | Per cent % | Plan | n/a | 0 | 14 | 14 | 95 | Semester/Annual | Refer to tasks achieved in annual work plan, given scores. | DOPF, MAF | DOPF, EPF | The number of six months progress reports will be submit to the Environment Protection Fund. The reports should guarantee the quality of each area of work. |
| | | | Revised Plan | | | 0 | 14 | | | | | | |
| | | | Actual | | | 14 | 76% | 100% | | | | | |